# ລາຍການກວດເບິ່ງວິທີການພາກປະຕິບັດດ້ານຄວາມຊຳນານສຳລັບຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ ກົມ DSHS ໄດ້ອະນຸມັດ

## Skills Practice Procedure Checklist for Home Care Aides DSHS Approved

ລາຍການກວດເບິ່ງວິທີການພາກປະຕິບັດດ້ານຄວາມຊຳນານອັນນີ້ຈະຖືກໃຊ້ໂດຍຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນເພື່ອຈະຮຽນຮູ້ຄວາມຊຳນານທີ່ຖືກສິດສອນໂດຍໂຄງການຝຶກຝົນກ່ຽວກັບວຽກງານ ຫລື ໂດຍນາຍຄູສອນຕາມຊຸມນຸມຊົນຜູ້ທີ່ໃຊ້ຫລັກສູດການເບິ່ງແຍງດູແລພື້ນຖານ ຫລື ອຸປະກອນການຝຶກຝົນທີ່ຖືກອະນຸມັດແນວອື່ນໆ. ຈຸດກວດເບິ່ງທີ່ໄດ້ຂຽນເປັນຕົວເສັ້ນໃຫຍ່ຢູ່ໃນປື້ມຄູ່ມືຂອງວິທີການທັງນີ້ແມ່ນສຳຄັນທີ່ສຸດຕໍ່ການປະຕິບັດງານທີ່ປອດພັຍໃນຄວາມຊ່ຽວຊານ. ພາລະກິດທີ່ຖືກຂີດເປັນສີແຈ້ງຢູ່ຂ້າງລຸ່ມນີ້ບໍ່ແມ່ນພາກສ່ວນນຶ່ງຂອງການສອບເສັງ Prometric, ເຖິງຢ່າງໃດກໍຕາມ, ພາລະກິດເຫລົ່ານີ້ *ທຸກໆຢ່າງ* ທີ່ອູ້ມຊູກິຈກັມຂອງການດຳຣົງຊີວິດປະຈຳວັນ, ແມ່ນຕ້ອງມີເພື່ອຈະຖືກສະແດງໃຫ້ເບິ່ງ, ຢູ່ຊ່ອງຫນ້າຂອງນາຍຄູສອນຜູ້ທີ່ມີຄຸນນະວຸດທິເພື່ອຈະເປັນພາກສ່ວນນຶ່ງຂອງຫ້ອງຮຽນສຳລັບການອອກໃບປະກາດຢັ້ງຢືນຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ. ຈົ່ງມີການຝຶກຝົນທີ່ມີຄວາມສຸກແລະມ່ວນຊື່ນ!

## ສາຣະບານ — ຫນ້າເລກທີ


ພາກປະຕິບັດສຳລັບການເບິ່ງແຍງດູແລທົ່ວໄປ ........ 1
ການຕິດຕໍ່ສື່ສານ ແລະ ສິດທິຂອງລູກຄ້າ ........ 1
S.W.I.P.E.S ........ 1
ລ້າງມື ........ 1
ໃສ່ຖົງມື ........ 2
ປົດຖົງມືອອກ ........ 2
ໃຊ້ເຄື່ອງປ້ອງກັນສ່ວນຕົວ (PPE) ........ 2
ຊ່ວຍເຫລືອລູກຄ້າເພື່ອຈະພາຍ່າງ ........ 2
ຍ້າຍລູກຄ້າຈາກຕຽງນອນໄປຫາຕັ່ງນັ່ງ ຫລື ລໍ້ຊຸກຕັ່ງນັ່ງ ........ 2 / 3
ປີ້ນເບື້ອງ ແລະ ຕັ້ງທ່າລູກຄ້າຢູ່ໃນຕຽງ ........ 3
ການບົວຣະບັດປາກ/ກ່ຽວກັບປາກ ........ 4
ທຳຄວາມສະອາດ ແລະ ເກັບເອົາແຂ້ວປອມໄວ້ ........ 4
ການບົວຣະບັດເລັບມືເລັບຕີນ ........ 4 / 5
ການບົວຣະບັດຕີນ ........ 5
ຄຳແນະນຳທົ່ວໄປສຳລັບການບົວຣະບັດເລັບ ........ 6
ຊ່ວຍລູກຄ້າຜູ້ທີ່ມີແຂນອ່ອນເພັຽເພື່ອຈະນຸ່ງເຄື່ອງ ........ 6
ໃສ່ຖົງຂາສູງເຖິງຫົວເຂົ່າທີ່ຢືດໄດ້ໃຫ້ລູກຄ້າ ........ 6
ຊ່ວງຣະຍະການເຫນັງຕີງ (ROM) ສຳລັບບ່າເບື້ອງນຶ່ງ ........ 6 / 7
ຊ່ວງຣະຍະການເຫນັງຕີງ ROM ສຳລັບຫົວເຂົ່າ ແລະ ສົ້ນນ່ອງ ........ 7
ຊ່ວຍລູກຄ້າເພື່ອຈະກິນອາຫານ ........ 7
ຊ່ວຍລູກຄ້ານຳການອາບນ້ຳຢູ່ຕຽງ ........ 7 / 8
ຊ່ວຍນຳການບົວຣະບັດບ່ອນອະວັຍຍະວະເພດ ........ 8
ການບົວຣະບັດທໍ່ຢາງຣະບາຍ ........ 9
ການບົວຣະບັດທໍ່ຢາງຣະບາຍເປັນປອກ (ການກວດເບິ່ງຄືນ,ສະແດງໃຫ້ເບິ່ງຖ້າກ່ຽວຂ້ອງ) ........ 9
ການຊ່ວຍເຫລືອນຳຢາກິນ ........ 10
ຊ່ວຍເຫລືອລູກຄ້ານຳການໃຊ້ວັ້ຽງຢູ່ຕຽງນອນ ........ 10
ແຖຫນວດດ້ວຍມີດແຖທີ່ປອດພັຍ ........ 10


**ຫລັກຖານພິສູດຂອງການເຣັດແລ້ວ:** ເຈັ້ຽຫນ້ານີ້ ***ຕ້ອງ*** ຖືກສົ່ງໄປຫາ TrainingApprovalTPA@dshs.wa.gov in-box ສຳລັບນັກຮຽນ ***ແຕ່ລະຄົນ*** ຜູ້ທີ່ໄດ້ສຳເຣັດການຝຶກຝົນວິຊາສະເພາະ *OJT* ແລ້ວຢູ່ທີ່ ALF, AFH, ຫລື ESF. ........ 11

<u>ກະຣຸນາສັງເກດ:</u> ພາລະກິດວິຊາສະເພາະທຸກໆຢ່າງຕ້ອງຖືກສິດສອນໂດຍອາຈານສອນຜູ້ທີ່ຖືກອະນຸຍາດ ແລະ ຖືກສະແດງໃຫ້ເຫັນໂດຍນັກຮຽນຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ. ປະສິດທິພາບຂອງວິຊາສະເພາະຂອງຜູ້ຊ່ວຍເບິ່ງແຍງດູແລຢູ່ຕາມເຮືອນຈະຖືກຕີຣາຄາເບິ່ງໂດຍການໃຊ້ຫຸ່ນຄົນທີ່ຖືກຕ້ອງ.

<u>ແຫລ່ງຊ່ວຍເຫລືອເພີ້ມເຕີມ:</u>

Prometric Home Care Aide Checklist
Washington State Department of Health Home Care Aide Exam Preparation Materials

Washington State Department of Social & Health Services
Transforming lives

# ລາຍການກວດເບິ່ງວິທີການພາກປະຕິບັດດ້ານຄວາມຊໍານານສໍາລັບຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ ກົມ DSHS ໄດ້ອະນຸມັດ

## Skills Practice Procedure Checklist for Home Care Aides DSHS Approved

| **ພາກປະຕິບັດສໍາລັບການເບິ່ງແຍງດູແລທົ່ວໄປ – ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເລັດ ທ່ານຈະຕ້ອງໄດ້:** | ແມ່ນ | ບໍ່ແມ່ນ |
|---|---|---|
| ສະເໜີຕົວທ່ານເອງໃຫ້ລູກຄ້າໃນເວລາເລີ່ມຕົ້ນການເບິ່ງແຍງດູແລ | ☐ | ☐ |
| ໃຊ້ມາດຕາການຄວບຄຸມການຕິດເຊື້ອ ແລະ ການລະມັດລະວັງມາດຕະຖານເພື່ອຈະປ້ອງກັນລູກຄ້າ ແລະ ຕົວທ່ານເອງໂດຍຜ່ານວິທີການ | ☐ | ☐ |
| ສົ່ງເສີມຄວາມຕ້ອງການທາງສັງຄົມ ແລະ ມະນຸດສະທັມຂອງລູກຄ້າໂດຍຜ່ານວິທີການ | ☐ | ☐ |
| ສົ່ງເສີມ **ສິດທິ** ຂອງລູກຄ້າໂດຍຜ່ານວິທີການ | ☐ | ☐ |
| ສົ່ງເສີມ **ຄວາມປອດພັຍ** ຂອງລູກຄ້າໂດຍຜ່ານວິທີການ | ☐ | ☐ |
| ສົ່ງເສີມ **ຄວາມສະບາຍໃຈ** ຂອງລູກຄ້າໂດຍຜ່ານວິທີການ | ☐ | ☐ |
| ປະສິ່ງໃຊ້ສອຍທົ່ວໄປໄວ້ພາຍໃນເອື້ອມມືຂອງລູກຄ້າເວລາຈົບການເບິ່ງແຍງດູແລ, ເຊັ່ນວ່າ, ໂທຣະສັບ, ແວ່ນຕາ, ແນວບີບທີວີ, ເຈັ້ຽເຊັດ, ຈອກນໍ້າ) | ☐ | ☐ |

| **ການຕິດຕໍ່ສື່ສານ ແລະ ສິດທິຂອງລູກຄ້າ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເລັດ ທ່ານຈະຕ້ອງໄດ້:** | ແມ່ນ | ບໍ່ແມ່ນ |
|---|---|---|
| ອະທິບາຍວ່າທ່ານກໍາລັງເຮັດຫຍັງຢູ່ | ☐ | ☐ |
| ເວົ້າຊ້າໆ, ແຈ້ງໆ, ແລະ ດ້ວຍຄວາມນັບຖື | ☐ | ☐ |
| ຊັກຊວນລູກຄ້າໃຫ້ເຮັດນໍາ ແລະ ຟັງດ້ວຍຄວາມຕັ້ງໃຈ | ☐ | ☐ |
| ສັງເກດເບິ່ງການປ່ຽນແປງໃນລູກຄ້າ | ☐ | ☐ |
| ອູ້ມຊູທາງເລືອກ ແລະ ຄວາມເປັນເອກະຣາດຂອງລູກຄ້າ | ☐ | ☐ |
| ນັບຖືຄວາມຕ້ອງການໃນສິດສ່ວນຕົວຂອງລູກຄ້າ | ☐ | ☐ |

| **S.W.I.P.E.S. - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເລັດ ທ່ານຈະຕ້ອງໄດ້:** | ແມ່ນ | ບໍ່ແມ່ນ |
|---|---|---|
| ເກັບກໍາເອົາ **ອຸບປະກອນໃຊ້ສອຍ** ກ່ອນທີ່ຈະເລີ້ມຕົ້ນພາລະກິດ | ☐ | ☐ |
| **ລ້າງ** ມືຂອງທ່ານກ່ອນການສັມຜັດນໍາລູກຄ້າ | ☐ | ☐ |
| **ສະເໜີຕົວ** ທ່ານເອງໂດຍການບອກຊື່ຂອງທ່ານໃຫ້ລູກຄ້າຟັງ | ☐ | ☐ |
| **ຮັກສາຄວາມເປັນສ່ວນຕົວ** ຕະລອດການເບິ່ງແຍງດູແລດ້ວຍຜ້າກັ້ງ, ຕານ່າງ, ຫລື ປະຕູ | ☐ | ☐ |
| **ອະທິບາຍ** ສິ່ງທີ່ທ່ານກໍາລັງເຮັດໃຫ້ລູກຄ້າຟັງ | ☐ | ☐ |
| **ກວດເບິ່ງ** ບໍຣິເວນເພື່ອຈະໃຫ້ແນ່ໃຈວ່າທຸກໆຢ່າງກັບຄືນສູ່ສະພາບເດີມຫລັງຈາກພາລະກິດໄດ້ສໍາເຣັດແລ້ວ | ☐ | ☐ |

| **ການລ້າງມື - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເລັດ ທ່ານຈະຕ້ອງໄດ້:** | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຫ້ແນ່ໃຈວ່າອຸບປະກອນໃຊ້ສອຍແມ່ນຢູ່ພາຍໃນເອື້ອມມືງ່າຍໆເພື່ອວ່າຈະບໍ່ໄດ້ບາຍຫນ້າພຽງທີ່ເປື້ອນເປິຕະລອດພາລະກິດ | ☐ | ☐ |
| ເປີດນໍ້າອຸ່ນຢູ່ອ່າງນໍ້າ | ☐ | ☐ |
| **ລ້າງມືໃຫ້ປຽກ ແລະ ຣຸກໃຫ້ທົ່ວມື** | ☐ | ☐ |
| ໃສ່ສະບູໃສ່ມື | ☐ | ☐ |
| **ລ້າງອອກທົ່ວນິ້ວມື ແລະ ມືທຸກໆບ່ອນ, ລວມທັງເຫນືອຂໍ້ມື, ເຮັດໃຫ້ມີການສຽດສີຢ່າງຫນ້ອຍ 20 ວິນາທີ, ປີ່ມນິ້ວມືຊີ້ລົງລຸ່ມ** | ☐ | ☐ |
| ລ້າງມືໃຫ້ທົ່ວທຸກໆຫນ້າພຽງຂອງມື ແລະ ຂໍ້ມື ໂດຍບໍ່ຕ້ອງເຮັດໃຫ້ມືເປື້ອນ (ຮັກສາໃຫ້ປີ່ມນິ້ວມືຊີ້ລົງລຸ່ມ) | ☐ | ☐ |
| ໃຊ້ເຈັ້ຽເຊັດມືທີ່ສະອາດເພື່ອຈະເຊັດໃຫ້ແຫ້ງໃນນິ້ວມື, ມື, ແລະ ຂໍ້ມືທຸກໆບ່ອນເລີ້ມຕົ້ນຈາກນິ້ວມື | ☐ | ☐ |
| ໃຊ້ເຈັ້ຽເຊັດມືທີ່ສະອາດ, ແຫ້ງ, ເຊັດໃຫ້ແຫ້ງເພື່ອຈະມອດນໍ້າກອກໂດຍບໍ່ຕ້ອງເປື້ອນມື | ☐ | ☐ |
| ຖິ້ມເຈັ້ຽເຊັດມືທີ່ຖືກໃຊ້ແລ້ວໃສ່ໃນກະໂລ່ງຂີ້ເຫຍື້ອໂດຍທັນທີໂລດຫລັງຈາກມອດກອກນໍ້າ | ☐ | ☐ |
| ຈົບວິທີການດ້ວຍມືທີ່ສະອາດຫລີກລ້ຽງບໍ່ໃຫ້ເປື້ອນ (ເຊັ່ນວ່າການສັມຜັດໂດຍກົງນໍາບ່ອນເປີດນໍ້າ, ແນວດຶງເຈັ້ຽເຊັດມື, ອ່າງນໍ້າ, ຫລື ກະໂລ່ງຂີ້ເຫຍື້ອ) | ☐ | ☐ |

**ການໃສ່ຊຸບມື - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ລ້າງມືຂອງທ່ານກ່ອນທີ່ຈະມີການສັມຜັດນຳຊຸບມື | ☐ | ☐ |
| ກວດເບິ່ງຊຸບມືແຕ່ລະອັນເພື່ອຈະເບິ່ງວ່າມີຮູ ຫລື ບໍ່ ຫລື ມີການຊຸດໂຊມແນວອື່ນແນວໃດບໍ່ ກ່ອນທີ່ຈະໃຊ້ | ☐ | ☐ |
| ກຳເອົາຊຸບມືຢູ່ຂໍ້ມື ແລະ ດຶງເຂົ້າໃສ່ມື | ☐ | ☐ |
| ກຳເອົາຊຸບມືອີກເບື້ອງນຶ່ງ ແລະ ດຶງເຂົ້າໃສ່ມືອີກເບື້ອງນຶ່ງ | ☐ | ☐ |
| ກວດເບິ່ງໃຫ້ແນ່ໃຈວ່າຊຸບມືສຸບໃສ່ໃຫ້ຄັບດີໃສ່ນິ້ວມືທຸກໆນິ້ວ | ☐ | ☐ |

**ການປົດຊຸບມືອອກ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ດ້ວຍມືຂ້າງນຶ່ງທີ່ມີຊຸບມືຢູ່,ກຳເອົາຊຸບມືອີກຂ້າງນຶ່ງຢູ່ຂໍ້ມືໂລດທາງນອກ | ☐ | ☐ |
| ດຶງຊຸບມືອອກໃຫ້ຂ້າງໃນປີ້ນອອກມາ | ☐ | ☐ |
| ກຳເອົາຊຸບມືທີ່ຖືກດຶງອອກແລ້ວໄວ້ດ້ວຍມືທີ່ຍັງມີຊຸບມືຢູ່ແລະກໍໃຫ້ເປັນຫນ່ວຍນ້ອຍໆ | ☐ | ☐ |
| ດ້ວຍນິ້ວມືສອງນິ້ວຂອງມືເປົ່າ, ຈັບເອົາຢູ່ວ່າງຂໍ້ມືຂອງຊຸບມືທີສອງ | ☐ | ☐ |
| ດຶງຊຸບມືອອກເພື່ອຈະປີ້ນທາງໃນອອກມາເພື່ອວ່າມັນຈະຫໍ່ເອົາຊຸບມືອັນທຳອິດ | ☐ | ☐ |
| ປົດຊຸບມືອອກ, ລ້າງມື, ແລະ ຖິ້ມຊຸບມືໃສ່ໃນກະໂລ່ງຂີ້ເຫຍື້ອ | ☐ | ☐ |

**ປະຕິບັດຕາມຄຳຊີ້ນຳຂອງສູນກາງສຳລັບການຄວບຄຸມແລະການປ້ອງກັນພະຍາດ (CDC) ເພື່ອຈະຊີ້ບອກວ່າເມື່ອໃດຈະໃຊ້ອຸບປະກອນການປ້ອງກັນສ່ວນຕົວ (PPE) ແລະສຳລັບການສວມໃສ່ແລະການແກ້ອອກເຄື່ອງ PPE ເພື່ອຈະເຮັດຄວາມຊຳນານອັນນີ້ໃຫ້ເປັນຜົນສຳເຣັດ,ຕິດຕາມສາຍເຊືອຄ່າຍຂ້າງລຸ່ມນີ້ເພື່ອຈະກວດເບິ່ງຄືນແລະປະຕິບັດຣະບຽບການຂອງ PPE ປັດຈຸບັນທຸກໆຢ່າງນຳອາຈານສອນຄວາມຊຳນານຂອງທ່ານ.**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ການໃຊ້ອຸບປະກອນປ້ອງກັນສ່ວນຕົວ (PPE) CDC | ☐ | ☐ |

**ຊ່ວຍເຫລືອລູກຄ້າເພື່ອຈະພາຍ່າງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ຢືນຢູ່ທາງຫນ້າ ແລະ ປິ່ນຫນ້າໃສ່ລູກຄ້າ | ☐ | ☐ |
| ຊ່ວຍລູກຄ້າເພື່ອຈະໃສ່ເກີບທີ່ບໍ່ມື່ນ ແລະ ມັດຢ່າງຖືກຕ້ອງ | ☐ | ☐ |
| ອະທິບາຍຈຸດເປົ້າຫມາຍຂອງການຍ່າງກ່ອນທີ່ລູກຄ້າຈະເລີ້ມຕົ້ນຍ່າງ | ☐ | ☐ |
| ຕຽມລູກຄ້າສຳລັບການຢືນຂຶ້ນໂດຍການຕັ້ງຫົວເຂົ່າໃສ່ມູມ 90 ອົງສາດ້ວຍຕີນຢຽບພື້ນ | ☐ | ☐ |
| ໃຫ້ລູກຄ້າກົ້ມໄປທາງຫນ້າຢູ່ຕັ່ງນັ່ງກ່ອນທີ່ຈະຢືນຂຶ້ນ | ☐ | ☐ |
| ຮັດສາຍແອວຊ່ວຍຍ້າຍ/ດຶງ (ຖ້າຫາກຕ້ອງການ) ອ້ອມແອວຂອງລູກຄ້າ, ຊ່ວຍລູກຄ້າໃຫ້ຢືນຂຶ້ນ | ☐ | ☐ |
| ພາລູກຄ້າໃຫ້ອິ່ມຂຶ້ນດ້ວຍແຂນຈາກຕັ່ງນັ່ງເພື່ອຈະຢືນຂຶ້ນ | ☐ | ☐ |
| ວາງມືໃສ່ແຂນຂອງລູກຄ້າ, ຫລັງ,ແອວ,ຫລືກຳສາຍແອວຊ່ວຍໃນຂະນະທີ່ລູກຄ້າຢືນຂຶ້ນ | ☐ | ☐ |
| ຖາມລູກຄ້າວ່າເຂົາຮູ້ສຶກແນວໃດຫລັງຈາກທີ່ຢືນຂຶ້ນ ຫລື ໃນຂະນະທີ່ຍ່າງຢູ່ | ☐ | ☐ |
| ຍ່າງໃກ້ໆທາງຫລັງ ແລະ ຢູ່ທາງຂ້າງນຶ່ງ (ເບື້ອງທີ່ອ່ອນແອກວ່າ, ຖ້າມີ) ຂອງລູກຄ້າສຳລັບຣະຍະທາງເຕັມ | ☐ | ☐ |
| ພາໃຫ້ຕັ້ງທ່າກ່ອນທີ່ລູກຄ້າຈະນັ່ງລົງ, ໂດຍວາງຂາຢູ່ທາງກາງໃສ່ບ່ອນນັ່ງຂອງຕັ່ງສຳລັບການນັ່ງລົງທີ່ປອດພັຍ | ☐ | ☐ |
| ພາລູກຄ້າໃຫ້ເອື້ອມເຖິງຕັ່ງກ່ອນການນັ່ງລົງ | ☐ | ☐ |
| ວາງມືໃສ່ແຂນຂອງລູກຄ້າ, ຫລັງ, ແອວ ຫລື, ຖ້າຫາກວ່າຖືກໃຊ້, ກຳເອົາສາຍແອວຊ່ວຍຍ້າຍ/ດຶງເວລາລູກຄ້ານັ່ງລົງ. ຖອດສາຍແອວຊ່ວຍຍ້າຍ/ດຶງອອກ. | ☐ | ☐ |
| ປ່ອຍໃຫ້ລູກຄ້ານັ່ງຢູ່ຢ່າງປອດພັຍຢູ່ໃນຕັ່ງໂດຍມີກະໂພກອີງໃສ່ທາງຫລັງຂອງບ່ອນນັ່ງ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າຕ້ອງການຄວາມຊ່ວຍເຫລືອຕຽມພ້ອມທີ່ຈະຊ່ວຍເພື່ອຈະຍ່າງ.ບໍ່ມີເຄື່ອງຊ່ວຍເຫລືອແນວໃດຈະຖືກໃຊ້. ລູກຄ້າຈະນັ່ງຢູ່ຕັ່ງເມື່ອເວລາການເບິ່ງແຍງດູແລເລີ້ມຕົ້ນ.**

**ຍ້າຍລູກຄ້າຈາກຕຽງນອນໄປຫາຕັ່ງນັ່ງ ຫລື ລໍ້ຊຸກຕັ່ງນັ່ງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ວາງຕັ່ງນັ່ງ ຫລື ລໍ້ຊຸກຕັ່ງນັ່ງ ໃກ້ກັບຕຽງໂດຍການເອົາແຂນຂອງລໍ້ຊຸກຕັ່ງນັ່ງເກືອບຈະຕິດກັບຕຽງ | ☐ | ☐ |
| **ລອກຕີນລົດຢູ່ລໍ້ຊຸກຕັ່ງນັ່ງ** | ☐ | ☐ |
| ພັບບ່ອນວາງຕີນຂຶ້ນ ຫລື ຖອດອອກ | ☐ | ☐ |
| ຊ່ວຍລູກຄ້າເພື່ອຈະຊຸກລີໄປຫາທາງຂ້າງຂອງຕຽງ | ☐ | ☐ |
| ໃຫ້ການອູ້ມຊູໃນການຈັບຢູ່ທາງຫລັງຂອງບ່າຂອງລູກຄ້າ ຫລື ຫລັງ ແລະ ກະໂພກ, ລູກຄ້າໃຫ້ຢູ່ໃນທ່ານັ່ງ | ☐ | ☐ |

## ຍ້າຍລູກຄ້າຈາກຕຽງນອນໄປຫາຕັ່ງນັ່ງຫລືລໍ້ຊຸກຕັ່ງນັ່ງ-ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດທ່ານຈະຕ້ອງໄດ້ (ຕໍ່) :

| | ແມ່ນ | ບໍ່ແມ່ນ |
|---|---|---|
| ຊ່ວຍລູກຄ້າເພື່ອຈະໃສ່ເກີບທີ່ບໍ່ມື່ນ | ☐ | ☐ |
| ໃຫ້ແນ່ໃຈວ່າຕີນຈະປຽບແຈບຢູ່ພື້ນເຮືອນກ່ອນທີ່ຈະລຸກຂຶ້ນ | ☐ | ☐ |
| ຊ່ວຍໃສ່ສາຍແອວຊ່ວຍຍ້າຍ/ດຶງ (ຖ້າຕ້ອງການ) ໃສ່ກວມເຄື່ອງນຸ່ງ, ອ້ອມແອວຂອງລູກຄ້າໂດຍມີຊ່ວງວ່າງພຽງພໍເພື່ອຈະປ່ອນມືເຂົ້າໄປໄດ້ໃນຣະຫວ່າງ ສາຍແອວຊ່ວຍຍ້າຍ/ດຶງແລະ ຕົວຂອງລູກຄ້າ | ☐ | ☐ |
| ຢືນຢູ່ທາງໜ້າຂອງລູກຄ້າ | ☐ | ☐ |
| ກຳເອົາສາຍແອວຣັດຢູ່ທາງຂ້າງ ຫລື ອ້ອມທາງຫລັງໃນເວລາຊ່ວຍເຫລືອລູກຄ້າເພື່ອຈະຢືນຢູ່ ແລະ ຕະລອດການຊ່ວຍເຫລືອ | ☐ | ☐ |
| ງັດຂາຂອງລູກຄ້າເບື້ອງນຶ່ງ ຫລື ທັງສອງເບື້ອງໃສ່ຂາຂອງທ່ານເອງ, ແລ້ວດຶງລູກຄ້າໃຫ້ຢືນຂຶ້ນ | ☐ | ☐ |
| ປິ່ນລູກຄ້າໃນເວລາຢືນຢູ່ເພື່ອວ່າທາງຫລັງຂອງຂາຈະຢູ່ທາງກາງໃສ່ບ່ອນນັ່ງຂອງລໍ້ຊຸກຕັ່ງນັ່ງ | ☐ | ☐ |
| ພາລູກຄ້າທີ່ຈະກຳແຂນຂອງລໍ້ຊຸກກ່ອນທີ່ຈະນັ່ງລົງໃນລໍ້ຊຸກຕັ່ງນັ່ງ | ☐ | ☐ |
| ເອົາການນັ່ງລົງນຸ່ມໆທີ່ຄວບຄຸມໄດ້ໃສ່ຕັ່ງນັ່ງລໍ້ຊຸກ | ☐ | ☐ |
| ການຕັ້ງທ່າລູກຄ້າດ້ວຍກະໂພກຕິດກັບຫລັງຂອງລໍ້ຊຸກຕັ່ງນັ່ງ ແລະ ເຮັດໃຫ້ແນ່ໃຈວ່າຮ່າງກາຍຂອງລູກຄ້າໄດ້ປຽດຊື່ນຳຕັ່ງ | ☐ | ☐ |
| ປົດສາຍແອວຊ່ວຍຍ້າຍ/ດຶງອອກ | ☐ | ☐ |
| ການຕັ້ງທ່າຕີນຂອງລູກຄ້າ, ລອກ໌/ປົດລອກ໌ລໍ້ຊຸກຕັ່ງນັ່ງອີງຕາມຄວາມຊອບໃຈ ແລະ/ຫລື ຄວາມປອດພັຍຂອງລູກຄ້າ | ☐ | ☐ |
| ປະລູກຄ້າໄວ້ໃນລໍ້ຊຸກຕັ່ງນັ່ງໃນຮ່າງກາຍປຽດທີ່ຖືກຕ້ອງ ແລະ ຕີນປຽບຢູ່ບ່ອນວາງຕີນ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ການເບິ່ງແຍງດູແລເລີ້ມຕົ້ນເວລາລູກຄ້ານອນປຽດຢູ່ຕຽງນອນ. ລູກຄ້າສາມາດຢືນຂຶ້ນຢູ່ໄດ້ແຕ່ບໍ່ສາມາດຍ່າງໄດ້. ສາຍແອວຊ່ວຍຍ້າຍຈະຖືກໃຊ້.**

## ປິ່ນເບື້ອງ ແລະ ຕັ້ງທ່າລູກຄ້າຢູ່ໃນຕຽງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ເຮັດຫົວຕຽງໃຫ້ແບນລົງ,ຖ້າຫາກວ່າມັນຍັງບໍ່ທັນແບນເທື່ອ | ☐ | ☐ |
| ຢືນຢູ່ທາງຂ້າງຂອງຕຽງກົງກັນຂ້າມກັບທິດທາງທີ່ທ່ານມີແຜນຈະປິ້ນລູກຄ້າ | ☐ | ☐ |
| ພາລູກຄ້າທີ່ຈະດຶງລູກຄ້າມາຫາທ່ານ | ☐ | ☐ |
| ຖ້າຫາກວ່າລູກຄ້າບໍ່ສາມາດທີ່ຈະດຶງມາຫາທ່ານໄດ້, ຊ່ວຍລູກຄ້າໂດຍການເຮັດໃຫ້ຫມົດທັງຕົວຂອງລູກຄ້າໃຫ້ປຽດຊື່ ແລະ ໄກ້ກັບທ່ານເພື່ອວ່າທ່ານຈະກິ້ງລູກຄ້າໄດ້ຢ່າງປອດພັຍ | ☐ | ☐ |
| ວາງມືທັງສອງຂ້າງໃສ່ກ້ອງຫົວ/ບ່າຂອງລູກຄ້າ ແລະ ຍ້າຍສ່ວນຂອງຮ່າງກາຍໄປຫາທ່ານ | ☐ | ☐ |
| ວາງມືທັງສອງຂ້າງໃສ່ລຳຕົວແລະກົ້ນຂອງລູກຄ້າ ແລະ ຍ້າຍສ່ວນຂອງຮ່າງກາຍໄປຫາທ່ານ | ☐ | ☐ |
| ວາງມືທັງສອງຂ້າງໃສຕົ້ນຂາແລະຂາທາງລຸ່ມຂອງລູກຄ້າ ແລະ ຍ້າຍສ່ວນຂອງຮ່າງກາຍໄປຫາທ່ານ | ☐ | ☐ |
| ກັບຄືນມາຫາທາງຂ້າງຂອງຕຽງນອນທີ່ທ່ານມີແຜນທີ່ຈະປິ້ນລູກຄ້າ | ☐ | ☐ |
| ວາງແຂນຂອງລູກຄ້າໃສ່ທາງເທິງຂອງຫນ້າເອິກຂອງເຂົາເຈົ້າ ແລະ ໃຫ້ແນ່ໃຈວ່າຂາຂອງເຂົາເຈົ້າຄວ່າຍກັນໃນທິດທາງທີ່ທ່ານຈະປິ້ນລູກຄ້າໄປໃສ່ທາງຂ້າງຂອງເຂົາເຈົ້າ | ☐ | ☐ |
| ວາງມືຂອງທ່ານໃສ່ກະໂພກ ແລະ ບ່າຂອງລູກຄ້າ ແລະ ກິ້ງລູກຄ້າຄ່ອຍໆໄປທາງຂ້າງຂອງເຂົາເຈົ້າໄປຫາທ່ານ **(ເຄັດລັບ: ເຮັດໃຫ້ແນ່ໃຈວ່າມັນມີຊ່ວງວ່າງທີ່ຈະກິ້ງລູກຄ້າ)** | ☐ | ☐ |
| **ຕັ້ງທ່າລູກຄ້າໃສ່ຣະຍະຫ່າງທີ່ປອດພັຍຈາກສິ້ນຂອງຕຽງນອນເມື່ອເວລາປິ່ນຕົວໄປທາງຂ້າງ** | ☐ | ☐ |
| ຕັ້ງທ່າລູກຄ້າໃສ່ທ່າປຽດຊື່ຕົງຂອງຮ່າງກາຍທີ່ຖືກຕ້ອງ | ☐ | ☐ |
| ຫົວທີ່ຖືກອູ້ມຊູໂດຍຫມອນ | ☐ | ☐ |
| ບ່າໄຫລ່ຖືກແປງເພື່ອວ່າລູກຄ້າຈະບໍ່ນອນເຕັງແຂນ ແລະ ແຂນທາງເທິງໄດ້ຖືກຫນູນຮອງ. ປ່ອຍແຂນທາງລຸ່ມ ແລະ ບ່າໄຫລ່ຂອງລູກຄ້າບໍ່ໃຫ້ອັດຢູ່ກ້ອງທາງຂ້າງ | ☐ | ☐ |
| ຫລັງຖືກຫນູນຮອງດ້ວຍສິ່ງຂອງຮອງ. ຕັ້ງທ່າອຸບປະກອນ (ເຊັ່ນວ່າ, ຫມອນ, ເບາະຮອງ) ບໍ່ໃຫ້ຫລັງຖືກກິ້ງ ຫລື ເຕັງເພື່ອຈະຮັກສາທ່າທາງນອນທາງຂ້າງຂອງລູກຄ້າ | ☐ | ☐ |
| ຫົວເຂົ່າພັບ, ຂາທາງເທິງຫນູນດ້ວຍເຄື່ອງຫນູນຮອງໂດຍໃຫ້ກະໂພກປຽດຊື່ທີ່ຖືກຕ້ອງ. ໃຊ້ອຸບປະກອນ (ເຊັ່ນວ່າ, ເບາະ, ຫມອນ) ເພື່ອຈະຫນູນຂາທາງເທິງ, ຮັກສາກະໂພກທາງເທິງໃຫ້ປຽດຊື່, ປະຫົວເຂົ່າທາງເທິງພັບຢູ່ | ☐ | ☐ |
| ປ່ອຍລູກຄ້າໃນທ່ານອນທາງຂ້າງ, ຫລີກເວັ້ນຄວາມເຂັ່ງຕຶງໂດຍກົງໃສ່ກະໂພກ. ສົ້ນນ່ອງຂອງເຂົາເຈົ້າ ແລະ ຫົວເຂົ່າແຍກກັນອອກ. | ☐ | ☐ |
| ຫນູນແຂນທາງເທິງດ້ວຍສິ່ງຫນູນອູ້ມຊູ | ☐ | ☐ |
| ປົກລູກຄ້າດ້ວຍຜ້າປູບ່ອນນອນທາງເທິງ, ປົດຊົບມືອອກ (ຖ້າຫາກວ່າໃຊ້) ແລະ ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້ານອນປຽດເຕັງຫລັງຂອງເຂົາເຈົ້າຢູ່ໃນຕຽງນອນເມື່ອເວລາການເບິ່ງແຍງດູແລເລີ້ມຕົ້ນ.**

**ການບົວລະບັດປາກ/ກ່ຽວກັບປາກ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເລັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃຫ້ແນ່ໃຈວ່າລູກຄ້າຢູ່ໃນທ່ານັ່ງຊື່ຕົງ | ☐ | ☐ |
| ລ້າງມື ແລະ ໃສ່ຖົງມື | ☐ | ☐ |
| ສະເໜີທີ່ຈະວາງຜ້າເຊັດໜ້າປົກໃສ່ໜ້າເອິກຂອງລູກຄ້າກ່ອນທີ່ຈະໃຫ້ການບົວລະບັດປາກ | ☐ | ☐ |
| ກ່ອນການເລີ້ມຕົ້ນ, ຖາມລູກຄ້າກ່ຽວກັບຄວາມເຈັບປວດໃນປາກຕ່າງໆ | ☐ | ☐ |
| ເຮັດໃຫ້ແປງຖູແຂ້ວ ຫລື ແນວພັດແຂ້ວປຽກ ແລະ ເອົາຢາຖູແຂ້ວໃສ່ | ☐ | ☐ |
| ທຳຄວາມສະອາດໜ້າພຽງຂອງແຂ້ວທຸກໆເຫລັ້ມດ້ວຍແປງຖູແຂ້ວ ຫລື ແນວພັດແຂ້ວ, ໂດຍການຖູແຂ້ວປີ້ນເປັນວົງອ້ອມຄ່ອຍໆ | ☐ | ☐ |
| ສະເໜີທີ່ຈະຖູລີ້ນຂອງລູກຄ້າ | ☐ | ☐ |
| ສະເໜີທີ່ຈະເອົານ້ຳສະອາດໃຫ້ລູກຄ້າເພື່ອຈະລ້າງປາກ | ☐ | ☐ |
| ຖືຊາມໃສ່ກ້ອງຄາງຂອງລູກຄ້າເພື່ອຈະໂຕ່ງເອົານ້ຳລ້າງປາກ | ☐ | ☐ |
| ເຊັດສົບ ແລະ ໜ້າຂອງລູກຄ້າໃຫ້ແຫ້ງ, ແລະ ເອົາຜ້າເຊັດໜ້າອອກ | ☐ | ☐ |
| ລ້າງອອກ ແລະ ເຊັດຊາມໃຫ້ແຫ້ງ ແລະ ລ້າງແປງຖູແຂ້ວກ່ອນຈະເກັບເອົາໄວ້ | ☐ | ☐ |
| ປົດຖົງມືອອກແລະເອົາຖິ້ມໄປ.ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ໂຕະໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ທຳຄວາມສະອາດ ແລະ ເກັບເອົາແຂ້ວປອມໄວ້ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເລັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃສ່ຖົງມື | ☐ | ☐ |
| ໃຊ້ເທັກນິກເພື່ອຈະລຸດຜ່ອນການສ່ຽງຕໍ່ການແຕກຫັກຂອງແຂ້ວປອມຖ້າຫາກວ່າຖືກຕົກລົງໃນລະຫວ່າງການທຳຄວາມສະອາດ (ເຊັ່ນວ່າ, ການພັດຖູແຂ້ວປອມໂດຍກົງທາງເທິງອ່າງນ້ຳທີ່ຖືກປູດ້ວຍຜ້າແພ/ເຈັ້ຍເຊັດ/ຜ້າເຊັດໜ້າ, ໃສ່ນ້ຳເຕັມພາຍໃນອ່າງນ້ຳ) | ☐ | ☐ |
| ຫລີກເວັ້ນການຕິດເຊື້ອໂຣກຂອງແຂ້ວປອມຕະລອດການດຳເນີນການ (ເຊັ່ນວ່າ,ການວາງໃຫ້ຟູຢູ່ອ່າງຫລືການການປະແຂ້ວປອມໂດຍກົງໃສ່ໜ້າພຽງທີ່ບໍ່ຖືກປ້ອງກັນ | ☐ | ☐ |
| ເອົາແຂ້ວປອມມາຈາກລູກຄ້າ. ຖ້າຫາກວ່າລູກຄ້າບໍ່ສາມາດທີ່ຈະຖອດເອົາມັນອອກໄດ້, ແຂ້ມປອມອອກຄ່ອຍໆຈາກປາກຂອງລູກຄ້າ. ເອົາແຂ້ວປອມທາງລຸ່ມອອກມາກ່ອນ, ແລ້ວຈຶ່ງເອົາແຂ້ວປອມທາງເທິງອອກ | ☐ | ☐ |
| ລ້າງແຂ້ມປອມໃສ່ນ້ຳເຢັນເປີດລົມໄວ້ກ່ອນທີ່ຈະພັດແຂ້ວປອມ | ☐ | ☐ |
| ເອົາຢາຖູແຂ້ວ ຫລື ຢາລ້າງແຂ້ວປອມໃສ່ແປງຖູແຂ້ວ | ☐ | ☐ |
| ຖູແຂ້ວປອມໃສ່ໜ້າພຽງທຸກໆບ່ອນ | ☐ | ☐ |
| ລ້າງແຂ້ວປອມທຸກໆໜ້າພຽງພາຍໃຕ້ນ້ຳເຢັນເປີດລົມຢູ່ | ☐ | ☐ |
| ຊ່ວຍລູກຄ້ານຳການເອົາແຂ້ວປອມໄປປະໄວ້ ຫລື ການເກັບຮັກສາໄວ້ | ☐ | ☐ |
| ລ້າງກັບເກັບແຂ້ມປອມໄວ້ກ່ອນທີ່ຈະເອົາແຂ້ວປອມໃສ່ໃນນັ້ນ | ☐ | ☐ |
| ເອົາແຂ້ວປອມໃສ່ໃນກັບເກັບແຂ້ວປອມທີ່ສະອາດນຳນ້ຳຢາ ຫລື ນ້ຳເຢັນ | ☐ | ☐ |
| ຖິ້ມແນວປົກອ່າງນ້ຳ ຫລື ແນວເປື້ອນແນວອື່ນໆໄປ. ປົດຖົງມືອອກ ແລະ ຖິ້ມໄປ. ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ໂຕະຫລືນອນຢຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ການບົວລະບັດເລັບມືເລັບຕີນ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເລັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ລ້າງມື ແລະ ໃສ່ຖົງມື | ☐ | ☐ |
| ເອົານ້ຳໃສ່ໃນຖ້ວຍ. ຢືນຢັນວ່ານ້ຳຈະປອດໄພ ແລະ ໃນອຸນຫະພູມທີ່ອົບອຸ່ນສຳລັບລູກຄ້າ. ດັດແປງຖ້າຫາກວ່າຈຳເປັນ | ☐ | ☐ |
| ວາງນ້ຳໄວ້ໃນລະດັບທີ່ສະດວກສະບາຍສຳລັບລູກຄ້າ | ☐ | ☐ |
| ເອົານິ້ວມືຂອງລູກຄ້າໃສ່ໃນນ້ຳ ແລະ ປະໃຫ້ແຊ່ໄວ້ | ☐ | ☐ |
| ເຊັດມືຂອງລູກຄ້າໃຫ້ແຫ້ງລວມທັງໃນລະຫວ່າງນິ້ວມື,ກ່ອນທີ່ຈະຕັດຫລືທຳຄວາມສະອາດນິ້ວມືຂອງລູກຄ້າ | ☐ | ☐ |
| ເຮັດໃຫ້ມືຂອງລູກຄ້າແຫ້ງໂດຍການແປະດ້ວຍຜ້າເຊັດ,ບໍ່ຖູໃສ່ | ☐ | ☐ |
| ທຳຄວາມສະອາດຢູ່ກ້ອງເລັບດ້ວຍທ່ອນສີນ້ຳໝາກກ້ຽງ. ເຊັດທ່ອນສີນ້ຳໝາກກ້ຽງອອກດ້ວຍຜ້າຫລັງຈາກເລັບແຕ່ລະນິ້ວ | ☐ | ☐ |
| ເຮັດເລັບໃຫ້ສະອາດດ້ວຍໄມ້ຖູເລັບ ຫລື ແຜ່ນພັດເລັບ | ☐ | ☐ |
| ຖູແຜ່ນພັດເລັບໄປແລະກັບແລະຢ່າສູ້ເຂົ້າເລິກໂພດໃນສິ້ນຍ້ອນວ່າມັນສາມາດເຮັດໃຫ້ເລັບແຍກອອກຈາກກັນແລະເຮັດໃຫ້ເລັບອ່ອນ | ☐ | ☐ |
| ຝົນເລັບມືຈາກຂ້າງນຶ່ງໄປຫາອີກຂ້າງນຶ່ງໃນທາງດຽວຫລືຖູຈອມຂອງເລັບແຕ່ລະເລັບຈາກສິ້ນໄປຫາທາງກາງ | ☐ | ☐ |

**ການບົວຣະບັດເລັບມືເລັບຕີນ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້ (ຕໍ່) :**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ຜິວໜັງຊັ້ນນອກໃຊ້ເປັນສິ່ງກີດກັ້ນການເປັນອັກເສບ,ຢ່າສູ່ຕັດໜັງຊັ້ນນອກ.................... | ☐ | ☐ |
| ຈີບລົງດ້ວຍແນວຖູເລັບໃຫ້ກ້ຽງແລະບໍ່ໃຫ້ມີລີ້ນບໍ່ສະເມີ.................... | ☐ | ☐ |
| ສະເມີທີ່ຈະທາໂລຊັ່ນໃຫ້.................... | ☐ | ☐ |
| ຖອກນ້ຳຖິ້ມ,ລ້າງຊາມໃຫ້ສະອາດ,ເກັບອຸບປະກອນໄວ້,ຖິ້ມຜ້າເປື້ອນທີ່ຖືກໃຊ້ແລ້ວແລະເອົາໃສ່ກະໂລ່ງຂີ້ເຫຍື້ອໃຫ້ເໝາະສົມ.................... | ☐ | ☐ |
| ແກ້ຊົບມືອອກ,ລ້າງມື.................... | ☐ | ☐ |

**ຖ້າຫາກວ່າລູກຄ້າມີບັນຫານຳການເດີນຂອງເລືອດຫລືໂຣກເບົາຫວານ,ຜູ້ເບິ່ງແຍງດູແລຢູ່ເຮືອນ**
**ບໍ່ຄວນຈະໃຊ້ໄມ້ສີນ້ຳໜາກກ້ຽງໃສ່ເລບຂອງລູກຄ້າ**

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ໂຕະໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ການບົວຣະບັດຕີນ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ.................... | ☐ | ☐ |
| ລ້າງມື ແລະ ໃສ່ຊົບມື .................... | ☐ | ☐ |
| ສຳຣວດເບິ່ງຕີນຂອງລູກຄ້າຢ່າງລະມັດລະວັງກ່ອນທີ່ຈະເລີ້ມຕົ້ນວິທີການໂດຍການກວດເບິ່ງຣະຫວ່າງນີ້ວຕີນ ແລະ ລີ້ນຂອງຕີນ. ຖາມລູກຄ້າເບິ່ງວ່າມີຄວາມເຈັບປວດ ຫລື ຄວາມຮູ້ສຶກແນວໃດບໍ່ກ່ອນທີ່ຈະເລີ້ມຕົ້ນ .................... | ☐ | ☐ |
| ເອົານ້ຳໃສ່ອ່າງນ້ຳ, ຕື່ມນ້ຳໃສ່ບໍ່ໃຫ້ໜ້ອຍກວ່າເຄິ່ງນຶ່ງເຕັມ .................... | ☐ | ☐ |
| ຖາມລູກຄ້າເບິ່ງວ່າອຸນຫະພູມແມ່ນສະດວກສະບາຍດີບໍ່ກ່ອນທີ່ຕີນຈະຖືກຈຸ່ມລົງໝົດຕີນ. ດັດແປງຖ້າຫາກວ່າຈຳເປັນ .................... | ☐ | ☐ |
| ເອົາຕີນຂອງລູກຄ້າໃສ່ລົງໄປໃນນ້ຳໝົດຕີນ.................... | ☐ | ☐ |
| ການອູ້ມຊູຕີນ ແລະ ລີ້ນນ່ອງຢ່າງຖືກຕ້ອງຕະລອດວິທີການ, ເອົາຕີນອອກຈາກນ້ຳ, ລ້າງຕີນທົ່ວທັງໝົດ, ລວມທັງຣະຫວ່າງນີ້ວຕີນ, ດ້ວຍຜ້າເຊັດໃສ່ສະບູ. **ເກັບຮັກສານ້ຳຢູ່ໃນອ່າງນ້ຳໂດຍປາສຈາກສະບູສຳລັບການໃຊ້ໃຫ້ເປັນນ້ຳລ້າງໂດຍ: (1) ການລ້າງຕີນດ້ວຍຜ້າເຊັດໃສ່ສະບູໃສ່ຜ້າເຊັດໂດຍກົງໂລດແທນທີ່ວ່າຈະຕື່ມສະບູໃສ່ອ່າງນ້ຳ; ຫລື (2) ການໃຊ້ອ່າງນ້ຳສອງອ່າງຕ່າງກັນ: ອ່າງນຶ່ງສຳລັບການລ້າງແລະອີກອ່າງນຶ່ງສຳລັບການໄລອອກ** ..... | ☐ | ☐ |
| ໃຫ້ແນ່ໃຈວ່າຈະຕື່ມສະບູໃສ່ໃນຜ້າເຊັດປຽກແທນທີ່ວ່າຈະໃສ່ໃນນ້ຳໂດຍກົງໂລດ.................... | ☐ | ☐ |
| ລ້າງຕີນຂອງລູກຄ້າໝົດທັງຕີນລວມທັງຣະຫວ່າງນີ້ວຕີນດ້ວຍຜ້າເຊັດໃສ່ສະບູຫລັງຈາກແຊ່ນ້ຳແລ້ວ .................... | ☐ | ☐ |
| ລ້າງເພື່ອຈະເອົາສະບູອອກຈາກຕີນແລະໃນຣະຫວ່າງນີ້ວຕີນ .................... | ☐ | ☐ |
| ກ່ອນການທຳຄວາມສະອາດເອົາຂີ້ເລັບຢູ່ກ້ອງເລັບຂອງລູກຄ້າອອກ, ເຊັດຕີນຂອງເຂົາເຈົ້າຄ່ອຍໆໃຫ້ແຫ້ງລວມທັງໃນຣະຫວ່າງນີ້ວຕີນຂອງເຂົາເຈົ້າ .... | ☐ | ☐ |
| ທຳຄວາມສະອາດຢູ່ກ້ອງເລັບດ້ວຍທ່ອນສີນ້ຳໝາກກ້ຽງ. ເຊັດທ່ອນສີນ້ຳໝາກກ້ຽງອອກດ້ວຍຜ້າຫລັງຈາກເລັບແຕ່ລະນີ້ວ .................... | ☐ | ☐ |
| ເຮັດເລັບໃຫ້ສະອາດດ້ວຍໄມ້ຖູເລັບ ຫລື ແຜ່ນຝົດເລັບ .................... | ☐ | ☐ |
| ຖູແຜ່ນຝົດເລັບໄປແລະກັບແລະຢ່າສູ້ເຂົ້າເລີກໂພດໃນລີ້ນຍ້ອນວ່າມັນສາມາດເຮັດໃຫ້ເລັບແຍກອອກຈາກກັນແລະເຮັດໃຫ້ເລັບອ່ອນ.................... | ☐ | ☐ |
| ຝົນເລັບມືຈາກຂ້າງນຶ່ງໄປຫາອີກຂ້າງນຶ່ງໃນທາງດຽວຫລືຖູຈອມຂອງເລັບແຕ່ລະເລັບຈາກລີ້ນໄປຫາທາງກາງ .................... | ☐ | ☐ |
| ຜິວໜັງຊັ້ນນອກໃຊ້ເປັນສິ່ງກີດກັ້ນການເປັນອັກເສບ,ຢ່າສູ່ຕັດໜັງຊັ້ນນອກ | ☐ | ☐ |
| ຈີບລົງດ້ວຍແນວຖູເລັບໃຫ້ກ້ຽງແລະບໍ່ໃຫ້ມີລີ້ນບໍ່ສະເມີ | ☐ | ☐ |
| ຖາມເບິ່ງວ່າລູກຄ້າຢາກໃຫ້ທາໂລຊັ່ນໃຫ້ ຫລື ບໍ່. ຖ້າຢາກໃຫ້, ເອົາໂລຊັ່ນໃສ່ໃນມືຂອງທ່ານ ແລະ ທາໂລຊັ່ນໃສ່ຕີນທັງໝົດຂອງລູກຄ້າ ແລະ ໃຫ້ແນ່ໃຈວ່າບໍ່ໄດ້ທາໂລຊັ່ນໃສ່ໃນຣະຫວ່າງນີ້ວຕີນ. ເຊັດສ່ວນເກີນຂອງໂລຊັ່ນອອກ (ຖ້າມີ) ດ້ວຍຜ້າເຊັດ.................... | ☐ | ☐ |
| ຊ່ວຍລູກຄ້າໃສ່ຖົງເທົ້າ ແລະ ເກີບ .................... | ☐ | ☐ |
| ຖອກນ້ຳອອກ, ໄລອອກ, ເຊັດອ່າງນ້ຳ, ແລະ ເກັບຮັກສາໄວ້ບ່ອນມັຽນທີ່ເໝາະສົມ.................... | ☐ | ☐ |
| ປົດຊົບມືອອກ ແລະ ລ້າງມື .................... | ☐ | ☐ |

**ຖ້າຫາກວ່າລູກຄ້າມີບັນຫານຳການເດີນຂອງເລືອດຫລືໂຣກເບົາຫວານ,ຜູ້ເບິ່ງແຍງດູແລຢູ່ເຮືອນ**
**ບໍ່ຄວນຈະໃຊ້ໄມ້ສີນ້ຳໝາກກ້ຽງໃສ່ເລັບຕີນຂອງລູກຄ້າ**

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ຕັ່ງໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ສິ່ງຕໍ່ລົງໄປນີ້ແມ່ນເຄັດລັບທົ່ວໄປເມື່ອເວລາຊ່ວຍເຫລືອລູກຄ້ານໍາການເບິ່ງແຍງດູແລເລັບ:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ສໍາຣວດເບິ່ງຕີນແລະມືຂອງລູກຄ້າເປັນປະຈໍາເບິ່ງການປ່ຽນແປງໃນສີຂອງເລັບ (ໂດຍສະເພາະການເປັນສີແດງ) , ອຸນຫະພູມ, ຕຸ່ມໃຂ່, ຮອຍຕັດ ຫລ ຮອຍຂູດ, ຮອຍແຕກຣະຫວ່າງນີ້ວຕີນ/ນີ້ວມື, ຫລື ການປ່ຽນແປງອື່ນໆ. ບັນທຶກໄວ້ ແລະ ລາຍງານການໃຂ່ບວມ ຫລື ຮອຍແດງຕ່າງໆທີ່ທ່ານສັງເກດ ເຫັນອ້ອມແອ້ມບໍຣິເວນຕີນ.ກວດເບິ່ງແຜນການປິ່ນປົວຂອງລູກຄ້າຢູ່ສະເມີກ່ອນຈະທໍາການບົວຣະບັດເລັບ | ☐ | ☐ |
| ສອດແນມເບິ່ງນໍາຮອຍປາດນ້ອຍໆ ແລະ ຮັກສາໃຫ້ມັນສະອາດ | ☐ | ☐ |
| ຢ່າສູ່ໃສ່ໂລເຊິນໃນຣະຫວ່າງນີ້ວຕີນ – ໂລເຊິນຈະເຣັດໃຫ້ມີຄວາມຊຸ່ມຊື່ນທີ່ເຣັດໃຫ້ມີການເຕີບໂຕຂອງເຊື້ອຣາ | ☐ | ☐ |
| ຢ່າສູ່ຕັດສິ້ນຂອງເລັບຂອງລູກຄ້າ ຫລື ຂູດລົງອ້ອມແອ້ມເລັບດ້ວຍສິ່ງແຫລມໆສໍາລັບລູກຄ້າຄົນໃດຄົນນຶ່ງ | ☐ | ☐ |
| ເລັບທີ່ກ້ຽງ,ສະອາດເຣັດໃຫ້ລູກຄ້າສະບາຍຕົວແລະມີຄວາມປອດພັຍ.ເລັບບໍ່ພຽງຫລືແຫລມສາມາດເກາະເອົາຫລືເຣັດໃຫ້ເຄື່ອງນຸ່ງຂາດແລະ ອາດຈະເຣັດໃຫ້ບາດເຈັບໃສ່ນີ້ວຕີນ/ນີ້ວມື.ໃຫ້ເຣັດນໍາຕີນແລະມືຂອງລູກຄ້າຄ່ອຍໆແລະຢ່າງລະມັດລະວັງ | ☐ | ☐ |

**ຊ່ວຍລູກຄ້າຜູ້ທີ່ມີແຂນອ່ອນເພັຽເພື່ອຈະນຸ່ງເຄື່ອງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊໍານານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ຖາມລູກຄ້າວ່າເຂົາເຈົ້າຢາກຈະນຸ່ງຫຍັງ | ☐ | ☐ |
| ໃສ່ເຄື່ອງຫຸກໆຕົວ, ຍ້າຍຕົວຂອງລູກຄ້າຄ່ອຍໆ ແລະ ຕາມທັມມະຊາດ, ຫລີກເວັ້ນການໃຊ້ຄວາມແຮງ ແລະ ໃສ່ກາຍເກີນແຂນຂາ ແລະ ຂໍ້ຕໍ່ | ☐ | ☐ |
| ຊ່ວຍລູກຄ້າໃສ່ແຂນເບື້ອງອ່ອນແອໃຫ້ໃສ່ແຂນເສື້ອຖືກເບື້ອງ, ເສື້ອສະແວເຕີ, ຫລື ສຸບໃສ່ເບື້ອງທີ່ບໍ່ເປັນຫຍັງ. ໃສ່ແຂນເສື້ອເບື້ອງອ່ອນແອກ່ອນ ໃສ່ເບື້ອງທີ່ບໍ່ເປັນຫຍັງ | ☐ | ☐ |
| ພາລູກຄ້າໃສ່ເຄື່ອງນຸ່ງ | ☐ | ☐ |
| ໃຫ້ແນ່ໃຈວ່າລູກຄ້ານັ່ງຢູ່ໃນເວລາເອົາຕີນແລະຂາເຂົ້າໃສ່ສິ້ງແລະເວລາຊ່ວຍນໍາເກີບທີ່ບໍ່ມື່ນ | ☐ | ☐ |
| ໃຫ້ການອູ້ມຊູແກ່ລູກຄ້າໃນເວລາດຶງສິ້ງຂຶ້ນ ແລະ ໃສ່ໃຫ້ຖືກ | ☐ | ☐ |
| ນຸ່ງເຄື່ອງໃຫ້ລູກຄ້າໃຫ້ແລ້ວຢ່າງເຫມາະສົມ (ນຸ່ງເຄື່ອງຖືກເບື້ອງ, ໃສ່ຊິບ/ກະດຸມ) ແລະ ພໍດີ | ☐ | ☐ |
| ລ້າງມື | ☐ | ☐ |

**ສໍາລັບການສອບເສັງເບິ່ງຄວາມຊໍານານຂອງ HCA, ລູກຄ້າສາມາດທີ່ຈະຢືນໄດ້. ລູກຄ້ານຸ່ງເສື້ອທີເຊີດ ແລະ ສິ້ງຊ້ອນໃນ ແລະ ຕ້ອງໄດ້ນຸ່ງເຄື່ອງໃສ່ເສື້ອ, ສິ້ງ, ຖົງເທົ້າ, ແລະ ເກີບ. ລູກຄ້າຈະຖືກນຸ່ງເຄື່ອງໃຫ້ດ້ວຍເຄື່ອງນຸ່ງຂອງເຂົາເຈົ້າເອງ.**

**ໃສ່ຖົງຂາສູງເຖິງຫົວເຂົ່າທີ່ຢືດໄດ້ໃຫ້ລູກຄ້າ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊໍານານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ຈັດແຈງຖົງຂາສໍາລັບການໃຊ້ໂດຍການປີ້ນຖົງຂາທາງໃນອອກມາ, ຢ່າງຫນ້ອຍມາຮອດເຂດສົ້ນນ່ອງ | ☐ | ☐ |
| ປ່ອນຕີນຂອງຖົງຂາໃສ່ນີ້ວຕີນ, ຕີນ, ແລະ ສົ້ນນ່ອງ, ການຍ້າຍຕີນ ແລະ ຂາຂອງລູກຄ້າຕາມທັມມະຊາດ, ການອູ້ມຊູສູງສຸດ ແລະ ການຫລີກເວັ້ນຄວາມແຮງ ຫລື ການດຶງກວມແຂນຂາ ແລະ ຂໍ້ຕໍ່ | ☐ | ☐ |
| ດຶງທາງເທິງຂອງຖົງຂາປົກຕີນ, ສົ້ນນ່ອງ, ແລະ ຂາ | ☐ | ☐ |
| ໃຫ້ແນ່ໃຈວ່າຖົງຂາແມ່ນຮຽບຮ້ອຍດີ, ບໍ່ມີບ່ອນບິດ ຫລື ຍໍ່, ແລະ ບໍ່ລັບເກີນໄປຢູ່ນີ້ວຕີນຂອງລູກຄ້າ | ☐ | ☐ |
| ການໃສ່ຖົງຂາກວມຕີນ ແລະ ສົ້ນນ່ອງໃນທ່າທີ່ຖືກຕ້ອງອີງຕາມການອອກແບບມາຂອງຖົງຂາ | ☐ | ☐ |
| ປະຖົງຂາປົກຫົວເຂົ່າ ແລະ ບໍ່ຍໍ່ | ☐ | ☐ |
| ລ້າງມື | ☐ | ☐ |

**ສໍາລັບການສອບເສັງເບິ່ງຄວາມຊໍານານຂອງ HCA, ລູກຄ້າກໍາລັງນອນຢຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ຊ່ວງຣະຍະການເຫນັງຕຶງສໍາລັບບ່າເບື້ອງນຶ່ງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊໍານານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃນຂະນະທີ່ອູ້ມຊູແຂນຂາຜ່ານການອອກກໍາລັງກາຍຕໍ່ລົງໄປນີ້,ເຫນັງຕຶງຂໍ້ຕໍ່ຄ່ອຍໆ, ຊ້າໆ, ແລະ ຢ່າງນຸ່ມນວນຕະລອດຊ່ວງຂອງການເຫນັງຕຶງໄປ ຫາຈຸດຂອງການຕ້ານທານ. ຢຸດຖ້າຫາກວ່າມີຄວາມເຈັບປວດເກີດຂຶ້ນ | ☐ | ☐ |
| ຖາມລູກຄ້າວ່າກ່ຽວກັບລະດັບຂອງສະດວກສະບາຍຂອງເຂົາເຈົ້າຕະລອດເວລາຂອງການອອກກໍາລັງກາຍ. ຢຸດຖ້າຫາກວ່າມີຄວາມເຈັບປວດເກີດຂຶ້ນ | ☐ | ☐ |
| ອູ້ມຊູແຂນຂອງລູກຄ້າໂດຍຈັບຢູ່ກ້ອງແຂນສອກ ແລະ ຂໍ້ມື, ໃນຂະນະທີ່ກໍາລັງທໍາການເຫນັງຕຶງສໍາລັບບ່າໄຫລ່ | ☐ | ☐ |

**ຊ່ວງຣະຍະການເຫນັງຕີງສຳລັບບ່າເບື້ອງນຶ່ງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້ (ຕໍ່ໆ):**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ຍົກແຂນປຽດອອກຂອງລູກຄ້າໄປຫາເພດານ, ກັບຄືນໄປຫາຫົວຕຽງນອນ (HOB) ແລະ ກັບຄືນໄປຫາທ່າແປນໃຫ້ເປັນການຫລຳຄືນເທື່ອນຶ່ງ (ການທົບໄປມາ/ການຍືດອອກສຳລັບບ່າ). ຫລຳຄືນສາມ (3) ເທື່ອ | ☐ | ☐ |
| ຍ້າຍແຂນປຽດອອກຂອງລູກຄ້າອອກໄປໄກຈາກທາງຂ້າງຂອງຮ່າງກາຍໄປຫາ HOB ແລະ ກັບຄືນແຂນປຽດອອກຂອງລູກຄ້າໄປຫາເຄື່ອງຕົວຂອງລູກຄ້າໃຫ້ເປັນການຫລຳຄືນເທື່ອນຶ່ງ (ການທົບໄປມາ/ການຍືດອອກສຳລັບບ່າ). ຫລຳຄືນສາມ (3) ເທື່ອ | ☐ | ☐ |
| ວາງແຂນສອກຂອງລູກຄ້າຢູ່ລະດັບຂອງບ່າຂອງລູກຄ້າ, ປີ້ນກົກແຂນໄປຫາ HOB ແລະ ປີ້ນແຂນທາງໜ້າລົງໄປຫາສະໂພກ. ຫລຳຄືນສາມ (3) ເທື່ອ. | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນອນປຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ຊ່ວງຣະຍະການເຫນັງຕີງສຳລັບຫົວເຂົ່າ ແລະ ສົ້ນນ່ອງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃນຂະນະທີ່ອູ້ມຊູແຂນຂາຂອງລູກຄ້າຜ່ານການອອກກຳລັງກາຍຕໍ່ລົງໄປນີ້,ຍົກຍ້າຍແຂ່ງຂາຄ່ອຍໆ, ຊ້າໆ, ແລະ ຢ່າງນຸ່ມນວນຕະລອດຊ່ວງຂອງການເຫນັງຕີງໄປຫາຈຸດຂອງການຕ້ານທານ | ☐ | ☐ |
| **ຫົວເຂົ່າ** ອູ້ມຊູຂາຂອງລູກຄ້າຢູ່ບ່ອນຂໍ້ຕໍ່ຂອງຫົວເຂົ່າ ແລະ ສົ້ນນ່ອງ, ໃນຂະນະທີ່ທຳການເຫນັງຕີງສຳລັບຫົວເຂົ່າ | ☐ | ☐ |
| ຖາມລູກຄ້າວ່າເຂົາເຈົ້າຮູ້ສຶກແນວໃດໃນຣະຫວ່າງການອອກກຳລັງກາຍ. ຢຸດຖ້າຫາກວ່າມີຄວາມເຈັບປວດເກີດຂຶ້ນ | ☐ | ☐ |
| ກົ່ງຫົວເຂົ່າກັບຄືນໄປຫາຈຸດຂອງການຕ້ານທານ ແລະ ແລ້ວເອົາຂາກັບຄືນປຽດໄປຫາຕຽງນອນ (ຕິດຕາມມາດ້ວຍການຢຶດຫົວເຂົ່າໃຫ້ຊື່ອອກໄປເປັນການຊ້ຳຫລຳຄືນນຶ່ງເທື່ອ (ການທົບ/ການຕໍ່ສົ້ນນ່ອງ).ຫລຳຄືນສາມ (3) ເທື່ອ | ☐ | ☐ |
| **ສົ້ນນ່ອງ** ອູ້ມຊູຕີນແລະສົ້ນນ່ອງໃນຂະນະທີ່ທຳການເຫນັງຕີງສຳລັບສົ້ນນ່ອງ | ☐ | ☐ |
| ຊຸກຕີນໄປທາງໜ້າໄປຫາຂາ, ແລະ ໃນການເຫນັງຕີງຕ່າງອີກ ຊຸກຕີນຊີ້ລົງໄປຫາຕີນຂອງຕຽງນອນໃຫ້ເປັນການຊ້ຳຫລຳຄືນນຶ່ງເທື່ອ (ການທົບ/ການຕໍ່ສົ້ນນ່ອງ).ຫລຳຄືນສາມ (3) ເທື່ອ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນອນປຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ຊ່ວຍລູກຄ້າເພື່ອຈະກິນອາຫານ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| **ໃຫ້ແນ່ໃຈວ່າລູກຄ້າຢູ່ໃນທ່ານັ່ງຊື່ຕົງຢູ່ຕັ່ງກ່ອນທີ່ການຊ່ວຍເຫລືອຈະເລີ້ມຕົ້ນ** | ☐ | ☐ |
| ສະເນີແນວປ້ອງກັນເຄື່ອງນຸ່ງໃຫ້ລູກຄ້າ | ☐ | ☐ |
| ນັ່ງຢູ່ໃນຣະດັບຂອງຕາຂອງລູກຄ້າເພື່ອຈະຊ່ວຍລູກຄ້າເພື່ອຈະກິນອາຫານ | ☐ | ☐ |
| ເອົາອາຫານເປັນຕ່ອນຂະນາດກິນຄຳນຶ່ງ, ປ່ຽນຊະນິດຂອງອາຫານທີ່ຖືກສະເນີໃຫ້ ຫລື ຖາມລູກຄ້າວ່າຈະມັກແນວໃດສຳລັບຄຳເຂົ້າແຕ່ລະຄຳ | ☐ | ☐ |
| ເອົາເຄື່ອງດື່ມໃຫ້ລູກຄ້າໃນຣະຫວ່າງກິນເຂົ້າ | ☐ | ☐ |
| ໃຫ້ແນ່ໃຈວ່າປາກຂອງລູກຄ້າເປົ່າກ່ອນທີ່ຈະປ້ອນອາຫານຕໍ່ໄປ ຫລື ເຄື່ອງດື່ມຕໍ່ໄປ | ☐ | ☐ |
| ຊັກຊວນລູກຄ້າໃຫ້ມີການສົນທະນາກັນຕະລອດເວລາກິນອາຫານ | ☐ | ☐ |
| ເຊັດອາຫານອອກຈາກປາກ ແລະ ມືຂອງລູກຄ້າຕາມທີ່ຈຳເປັນ ແລະ ໃນເວລາກິນອາຫານແລ້ວ | ☐ | ☐ |
| ເອົາແນວປ້ອງກັນເຄື່ອງນຸ່ງອອກ, ຖ້າຫາກວ່າໃສ່ຢູ່, ແລະ ຖີ້ມໄປໃນກະໂລ່ງທີ່ເຫມາະສົມ | ☐ | ☐ |
| ເອົາອາຫານທີ່ເຫລືອອອກ | ☐ | ☐ |
| ປະໂຕະໄວ້ໃຫ້ສະອາດ, ແຫ້ງ, ແລະ ບໍ່ມີອາຫານຈັກຢ່າງ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ໂຕະເມື່ອເວລາການເບິ່ງແຍງດູແລເລີ້ມຕົ້ນສຳລັບຄວາມຊຳນານອັນນີ້.**

**ຊ່ວຍລູກຄ້ານຳການອາບນ້ຳຢູ່ຕຽງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃສ່ຖົງມື | ☐ | ☐ |
| ເອົາອອກ ຫລື ທົບຄືນຫລັງຜ້າປູນອນທາງເທິງ. ປົກລູກຄ້າໄວ້ດ້ວຍຜ້າຫົ່ມອາບນ້ຳ ຫລື ຜ້າປູບ່ອນທາງເທິງ | ☐ | ☐ |
| ແກ້ຊຸດຄຸມ/ຊຸດນອນຂອງລູກຄ້າອອກ | ☐ | ☐ |
| ໃຫ້ແນ່ໃຈວ່າອຸນຫະພູມຂອງນ້ຳແມ່ນປອດພັຍ ແລະ ຢືນຢັນນຳລູກຄ້າວ່າມັນເປັນອຸນຫະພູມທີ່ສະບາຍດີສຳລັບເຂົາເຈົ້າ. ດັດແປງຖ້າຫາກວ່າຈຳເປັນ | ☐ | ☐ |

| ຊ່ວຍລູກຄ້ານຳການອາບນ້ຳຢູ່ຕຽງ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້ (ຕໍ່) : | ແມ່ນ | ບໍ່ແມ່ນ |
|---|---|---|
| ເກັບຮັກສານ້ຳຢູ່ໃນອ່າງນ້ຳໂດຍບໍ່ໃຫ້ມີສະບູສຳລັບການໃຊ້ໃຫ້ເປັນນ້ຳລ້າງໃຫ້ກ້ຽງໂດຍ: (1) ການລ້າງດ້ວຍຜ້າເຊັດໃສ່ສະບູໃສ່ຜ້າເຊັດໂດຍກົງໂລດ ແທນທີ່ວ່າຈະຕື່ມສະບູໃສ່ອ່າງນ້ຳ; ຫລື (2) ການໃຊ້ອ່າງນ້ຳສອງອ່າງຕ່າງກັນ: ອ່າງນຶ່ງສຳລັບການລ້າງ ແລະ ອີກອ່າງນຶ່ງສຳລັບການໄລອອກ | ☐ | ☐ |
| ປ່ຽນນ້ຳທຸກໆເວລາເມື່ອມັນມີສະບູ, ເຢັນ, ຫລື ເປື້ອນ | ☐ | ☐ |
| ວາງຜ້າເຊັດແຫ້ງໃສ່ຫລັງຂອງຫົວ/ຄໍຂອງລູກຄ້າ | ☐ | ☐ |
| ເຮັດໃຫ້ຜ້າເຊັດປຽກ (ບໍ່ໃສ່ສະບູ) ແລະ ເລີ່ມຕົ້ນຈາກຕາ. ໃຊ້ບໍລິເວນອື່ນຂອງຜ້າເຊັດສຳລັບຕາແຕ່ລະເບື້ອງ, ລ້າງສິ້ນທາງໃນມາຫາສິ້ນທາງນອກ | ☐ | ☐ |
| ລ້າງສ່ວນເຫລືອຂອງຫນ້າ, ຫູ, ແລະ ຄໍໂດຍການໃຊ້ສະບູ (ຖ້າຫາກວ່າລູກຄ້າຊອບໃຈ) | ☐ | ☐ |
| ລ້າງໃຫ້ກ້ຽງ, ໃຊ້ຜ້າເຊັດໃຫ້ແຫ້ງ – ຕົບເບົາໆ, ຢ່າສູ່ຖູ | ☐ | ☐ |
| ເອົາແຂນເບື້ອງນຶ່ງອອກມາ ແລະ ເອົາຜ້າເຊັດວາງໃສ່ທາງກ້ອງ. ອູ້ມຊູແຂນຂອງລູກຄ້າດ້ວຍຝາມືຂອງທ່ານໃສ່ກ້ອງແຂນສອກຂອງລູກຄ້າ. ລ້າງແຂນຂອງລູກຄ້າ, ບ່າໄຫລ່, ແລະ ຂີ້ແຮ້. ລ້າງ ແລະ ເຊັດເບົາໆໃຫ້ແຫ້ງ. | ☐ | ☐ |
| ວາງມືຂອງລູກຄ້າໃສ່ອ່າງນ້ຳ. ລ້າງມືຂອງລູກຄ້າ, ລ້າງໃຫ້ກ້ຽງ, ແລະ ເຊັດເບົາໆໃຫ້ແຫ້ງ. ເຮັດຫລຳຄືນນຳແຂນ ແລະ ມືອີກເບື້ອງນຶ່ງ | ☐ | ☐ |
| ລ້າງ, ລ້າງໃຫ້ກ້ຽງ, ແລະ ເຊັດເບົາໆໃນຫນ້າເອິກ ແລະ ທ້ອງຂອງລູກຄ້າໃຫ້ແຫ້ງ | ☐ | ☐ |
| ບໍ່ປົກຂາຂອງລູກຄ້າເບື້ອງນຶ່ງ ແລະ ວາງຜ້າເຊັດໃສ່ທາງຍາວຢູ່ກ້ອງຕີນ ແລະ ຂາ. ກົ່ງຫົວເຂົ່າ ແລະ ອູ້ມຂາໃສ່ແຂນຂອງທ່ານ. ລ້າງຂາ, ລ້າງໃຫ້ກ້ຽງ, ແລະ ເຊັດເບົາໆໃຫ້ແຫ້ງ | ☐ | ☐ |
| ເລື່ອນຕີນຂອງລູກຄ້າເຂົ້າໃສ່ອ່າງນ້ຳ. ລ້າງຕີນຂອງລູກຄ້າ, ລ້າງໃຫ້ກ້ຽງ, ແລະ ເຊັດເບົາໆໃຫ້ແຫ້ງ, ຫລຳຄືນໃຫມ່ຢູ່ຂາ ແລະ ຕີນ | ☐ | ☐ |
| ຊ່ວຍລູກຄ້າໃຫ້ປີ້ນໄປທາງຂ້າງຂອງເຂົາເຈົ້າ, ໄກໄປຈາກທ່ານ. ວາງຜ້າຫົ່ມອາບນ້ຳ ຫລື ຜ້າເຊັດຕາມຫລັງຂອງເຂົາເຈົ້າ. ລ້າງຫລັງ ແລະ ກະໂພກຂອງລູກຄ້າ,ລ້າງໃຫ້ກ້ຽງ,ແລະຕົບເບົາໆໃຫ້ແຫ້ງ | ☐ | ☐ |
| ຊ່ວຍລູກຄ້ານຳຫລັງຂອງເຂົາເຈົ້າ. ເອົາສິດສ່ວນຕົວໃຫ້ ແລະ ໃຫ້ລູກຄ້າທຳການບົວຣະບັດບໍລິເວນກົ້ນຂອງເຂົາເຈົ້າເອງ (ຖ້າສາມາດເຮັດໄດ້) ; ຖ້າບໍ່ໄດ້,ພາລະກິດອັນນີ້ຈະຖືກເວົ້າເຖິງຕ່າງຫາກ | ☐ | ☐ |
| ປະລູກຄ້າໃຫ້ຖືກປົກໄວ້ດ້ວຍຜ້າປູບ່ອນແລະ/ຫລືຜ້າຫົ່ມໃນຂັ້ນສຸດທ້າຍຂອງການບົວຣະບັດ | ☐ | ☐ |
| ເອົາເຄື່ອງປູນອນອອກທີ່ອາດຈະປຽກ | ☐ | ☐ |
| ປະເຄື່ອງນຸ່ງ ແລະ ຜ້າປູບ່ອນນອນທີ່ເປື້ອນໃສ່ໃນກະໂລ່ງທີ່ເຫມາະສົມ | ☐ | ☐ |
| ຖອກນ້ຳອອກຈາກອ່າງອາບນ້ຳ, ລ້າງໃຫ້ກ້ຽງ, ທຳຄວາມສະອາດ, ຂ້າພະຍາດ ແລະ ເອົາໄປໄວ້ຄືນຢູ່ບ່ອນເກັບໄວ້ທີ່ເຫມາະສົມ | ☐ | ☐ |
| ປົດອອກ ແລະ ຖິ້ມໄປຊົບມືເປື້ອນ | ☐ | ☐ |
| ລ້າງມື | ☐ | ☐ |

| **ຊ່ວຍນຳການບົວຣະບັດບ່ອນອະວັຍຍະວະເພດ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:** | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ເປີດນ້ຳໃສ່ອ່າງນ້ຳ, ໃຊ້ນ້ຳທີ່ມີອຸນຫະພູມປອດພັຍ ແລະ ສະບາຍດີສຳລັບລູກຄ້າ. ດັດແປງຕາມທີ່ຖືກຮ້ອງຂໍ | ☐ | ☐ |
| ໃສ່ຊົບມືໃນຂະນະທີ່ໃຫ້ການບົວຣະບັດອະວັຍຍະວະເພດ, ໃນເວລາລ້າງໃຫ້ກ້ຽງ ແລະ ເຮັດໃຫ້ແຫ້ງໃນອຸບປະກອນ ແລະການເຮັດນຳຜ້າປູບ່ອນທີ່ເປື້ອນ | ☐ | ☐ |
| ປ້ອງກັນເຄື່ອງປູບ່ອນນອນຂອງລູກຄ້າບໍ່ໃຫ້ປຽກດ້ວຍຜ້າເຊັດ ຫລື ແຜ່ນປູຕຽງທີ່ຖິ້ມໄປໄດ້ | ☐ | ☐ |
| ບໍ່ປົດບໍລິເວນອະວັຍຍະວະເພດ. ໃຫ້ແນ່ໃຈວ່າສິດສ່ວນຕົວຂອງລູກຄ້າໄດ້ຖືກຮັກສາໄວ້ | ☐ | ☐ |
| ເກັບຮັກສານ້ຳຢູ່ໃນອ່າງນ້ຳໂດຍບໍ່ໃຫ້ມີສະບູສຳລັບການໃຊ້ໃຫ້ເປັນນ້ຳລ້າງໃຫ້ກ້ຽງໂດຍ: (1) ການລ້າງດ້ວຍຜ້າເຊັດໃສ່ສະບູໃສ່ຜ້າເຊັດໂດຍກົງໂລດ ແທນທີ່ວ່າຈະຕື່ມສະບູໃສ່ອ່າງນ້ຳ; ຫລື (2) ການໃຊ້ອ່າງນ້ຳສອງອ່າງຕ່າງກັນ: ອ່າງນຶ່ງສຳລັບການລ້າງ ແລະ ອີກອ່າງນຶ່ງສຳລັບການໄລອອກ | ☐ | ☐ |
| ລ້າງບໍລິເວນອະວັຍຍະວະເພດຄ່ອຍໆດ້ວຍຜ້າເຊັດໃສ່ສະບູ. ໃຊ້ຜ້າເຊັດບ່ອນທີ່ສະອາດສຳລັບການຖູໄປຖູມາແຕ່ລະເທື່ອ. ທຳຄວາມສະອາດບໍລິເວນ ອະວັຍຍະວະເພດຈາກທາງຫນ້າໄປຫາທາງຫລັງ | ☐ | ☐ |
| ລ້າງບໍລິເວນອະວັຍຍະວະເພດດ້ວຍຜ້າເຊັດສະອາດ.ໃຊ້ຜ້າເຊັດບໍລິເວນສະອາດສຳລັບການຖູໄປຖູມາແຕ່ລະເທື່ອ. ລ້າງໃຫ້ກ້ຽງຈາກທາງຫນ້າໄປ ຫາທາງຫລັງຂອງບໍລິເວນອະວັຍຍະວະເພດ | ☐ | ☐ |
| ເຊັດເບົາໆໃຫ້ແຫ້ງບໍລິເວນຂອງອະວັຍຍະວະເພດ, ຍ້າຍຈາກທາງຫນ້າໄປທາງຫລັງ | ☐ | ☐ |
| **ຊ່ວຍລູກຄ້ານຳການກົ້ງໄປທາງຂ້າງ. ໃຫ້ແນ່ໃຈວ່າລູກຄ້າຢູ່ໃນຣະຍະຫ່າງທີ່ປອດພັຍຈາກສິ້ນຂອງຕຽງນອນ** | ☐ | ☐ |
| ລ້າງ, ລ້າງໃຫ້ກ້ຽງ, ແລະ ເຊັດເບົາໆໃຫ້ແຫ້ງຢູ່ກົ້ນ ແລະ ບໍລິເວນໄກ້ຮູທະວານ. ໃຊ້ຜ້າເຊັດຢູ່ບ່ອນສະອາດສຳລັບການຖູໄປຖູມາແຕ່ລະເທື່ອ. ເຊັດຈາກທາງຫນ້າໄປທາງຫລັງເພື່ອຈະຫລີກເວັ້ນການເຮັດໃຫ້ບໍລິເວນອະວັຍຍະວະເພດເປື້ອນ | ☐ | ☐ |
| ປ່ຽນແຜ່ນປູຕຽງ ຫລື ຜ້າປູນອນທາງລຸ່ມ, ຖ້າຈຳເປັນ | ☐ | ☐ |
| ລຸດຜ່ອນໃຫ້ຫນ້ອຍລົງການສະແດງໃຫ້ເຫັນຮ່າງກາຍຂອງລູກຄ້າໃນຣະຫວ່າງການປະຕິບັດການ | ☐ | ☐ |
| ປະລູກຄ້າໃຫ້ຖືກປົກໄວ້ດ້ວຍຜ້າປູບ່ອນແລະ/ຫລືຜ້າຫົ່ມໃນຂັ້ນສຸດທ້າຍຂອງການບົວຣະບັດ | ☐ | ☐ |
| ເອົາອອກໄປຜ້າເຊັດທີ່ເປື້ອນ ຫລື ປຽກ, ຜ້າເຊັດ, ແຜ່ນປູຕຽງ, ເຄື່ອງປູຕຽງນອນ, ຫລື ເຄື່ອງນຸ່ງ. ຖິ້ມໃສ່ໃນກ່ອງບັນຈຸທີ່ເຫມາະສົມ | ☐ | ☐ |
| ປົດຊົບມືອອກ ແລະ ຖິ້ມຊົບມືເປື້ອນໄປ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າເປັນຫຸ່ນສະແດງແບບເພດຍິງ. ລູກຄ້າກຳລັງນອນຢຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້. ຄວາມຊຳນານອັນນີ້ຈະຖືກເຮັດໂດຍການໃຊ້ສະບູ ແລະ ນ້ຳບໍ່ແມ່ນເຈັ້ຽເຊັດ.**

## ການບົວລະບັດທໍ່ຢາງລະບາຍ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊໍານານອັນນີ້ຢ່າງເປັນຜົນສໍາເລັດ ທ່ານຈະຕ້ອງໄດ້:

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊໍານານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ກວດເບິ່ງອຸນຫະພູມຂອງນ້ຳຢູ່ໃນອ່າງ.ພິຈາລະນາເບິ່ງວ່າອຸນຫະພູມຂອງນ້ຳແມ່ນປອດພັຍແລະພິສູດວ່າລູກຄ້າສະບາຍຕົວ.ດັດແປງຖ້າຈໍາເປັນ | ☐ | ☐ |
| ເກັບຮັກສານ້ຳຢູ່ໃນອ່າງນ້ຳໂດຍບໍ່ໃຫ້ມີສະບູສໍາລັບການໃຊ້ໃຫ້ເປັນນ້ຳລ້າງໃຫ້ກ້ຽງໂດຍ: (1) ການລ້າງດ້ວຍຜ້າເຊັດໃສ່ສະບູໃສ່ຜ້າເຊັດໂດຍກົງໂລດແທນທີ່ວ່າຈະຕື່ມສະບູໃສ່ອ່າງນ້ຳ; ຫລື (2) ການໃຊ້ອ່າງນ້ຳສອງອ່າງຕ່າງກັນ: ອ່າງນຶ່ງສໍາລັບການລ້າງ ແລະ ອີກອ່າງນຶ່ງສໍາລັບການໄລອອກ | ☐ | ☐ |
| ລຸດຜ່ອນການສະແດງໃຫ້ເຫັນຕົນຕົວຂອງລູກຄ້າໃນລະຫວ່າງການບົວລະບັດ | ☐ | ☐ |
| ໃສ່ຖົງມື, ກ່ອນທີ່ຈະເຮັດນໍາທໍ່ຢາງລະບາຍ, ທໍ່ຢາງ, ຖົງເກັບນ້ຳຍ່ຽວ ຫລື ການເລີ່ມຕົ້ນລ້າງໃຫ້ກ້ຽງ ແລະ ຕະລອດວິທີການໃນຂະນະທີ່ລ້າງໃຫ້ກ້ຽງ ຫລື ເຮັດໃຫ້ອຸປະກອນແຫ້ງ ແລະ ການເຮັດນໍາຜ້າປູບ່ອນເປື້ອນ | ☐ | ☐ |
| **ຕັ້ງທ່າລູກຄ້າໃຫ້ມີລະຍະຫ່າງທີ່ປອດພັຍຈາກສົ້ນຂອງຕຽງນອນຖ້າຫາກວ່າຖືກປິ່ນມາທາງຂ້າງໃນລະຫວ່າງການບົວລະບັດ** | ☐ | ☐ |
| ວາງຜ້າເຊັດ ຫລື ແຜ່ນຜ້າໃສ່ກ້ອງທໍ່ຢາງລະບາຍກ່ອນທີ່ຈະລ້າງອອກເພື່ອຈະບໍ່ໃຫ້ຜ້າປູບ່ອນ ຫລື ເຄື່ອງນຸ່ງຂອງລູກຄ້າປຽກໃນລະຫວ່າງການລ້າງອອກ | ☐ | ☐ |
| ບໍ່ປົກບໍລິເວນອ້ອມຂ້າງທໍ່ຢາງເທົ່ານັ້ນ | ☐ | ☐ |
| ໃຊ້ຜ້າເຊັດໃສ່ສະບູເພື່ອຈະລ້າງທໍ່ຢາງລະບາຍ | ☐ | ☐ |
| ປ່ຽນຈຸດໃນຜ້າເຊັດສໍາລັບການຖູໄປຖູມາແຕ່ລະເທື່ອໃນເວລາລ້າງ ແລະ ລ້າງໃຫ້ກ້ຽງ. ຢ່າງສູ້ດຶງທໍ່ຢາງ. ຈັບທໍ່ຢາງໄວ້ໃກ້ກັບບ່ອນທີ່ມັນສອດເຂົ້າຮ່າງກາຍເພື່ອຈະຫລີກເວັ້ນການດຶງທໍ່ຢາງ | ☐ | ☐ |
| ທໍາຄວາມສາອາດທໍ່ຢາງຢ່າງຫນ້ອຍສີ່ອິນຊ໌ໃກ້ທີ່ສຸດກັບປາກເປີດ, ຍ້າຍອອກຈາກບ່ອນເປີດລົງໄປໄກຈາກຮ່າງກາຍ. ໃຊ້ບໍລິເວນສະອາດຂອງຜ້າເຊັດສໍາລັບການຖູໄປຖູມາແຕ່ລະເທື່ອ | ☐ | ☐ |
| ໃຊ້ຜ້າເຊັດພື້ນຕ່າງ,ລ້າງໃຫ້ກ້ຽງຢ່າງຫນ້ອຍສີ່ອິນຊ໌ໃກ້ທີ່ສຸດກັບປາກເປີດ, ຍ້າຍອອກຈາກບ່ອນເປີດລົງໄປໄກຈາກຮ່າງກາຍ. ໃຊ້ບໍລິເວນສະອາດຂອງຜ້າເຊັດສໍາລັບການຖູໄປຖູມາແຕ່ລະເທື່ອ | ☐ | ☐ |
| ເຊັດໃຫ້ແຫ້ງບໍລິເວນຂອງຜິວຫນັງຂອງລູກຄ້າທີ່ຖືກເຮັດປຽກ | ☐ | ☐ |
| ປະບໍລິເວນຜິວຫນັງ ແລະ ຜ້າປູບ່ອນທີ່ປຽກໃນລະຫວ່າງການບົວລະບັດໃຫ້ແຫ້ງຫລັງຈາກບົວລະບັດແລ້ວ | ☐ | ☐ |
| ເອົາຖົງໂຕ່ງຮັບເອົານ້ຳຍ່ຽວໃສ່ໄວ້ຕໍ່າກວ່າພົກຍ່ຽວຕະລອດການບົວລະບັດແລະຮອດທ້າຍຂອງວິທີການ.ໃຫ້ແນ່ໃຈວ່າບໍ່ມີບ່ອນຕິດຂັດຢູ່ໃນທໍ່ຢາງລະບາຍ | ☐ | ☐ |
| ຖິ້ມຜ້າເຊັດ ແລະ ສິ່ງອື່ນໆໃສ່ໃນກ່ອງບັນຈຸທີ່ເຫມາະສົມ | ☐ | ☐ |
| ປົກລູກຄ້າໄວ້ດ້ວຍຜ້າປູບ່ອນທາງເທິງໃນເວລາສຸດທ້າຍຂອງການບົວລະບັດ | ☐ | ☐ |
| ປົດຖົງມືອອກ ແລະ ຖິ້ມຖົງມືໄປ ແລະ ລ້າງມື | ☐ | ☐ |

**ສໍາລັບການສອບເສັງເບິ່ງຄວາມຊໍານານຂອງ HCA, ລູກຄ້າກໍາລັງນອນປຽດຢູ່ຕຽງນອນໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

## ການບົວລະບັດທໍ່ຢາງລະບາຍເປັນປອກຖົງ

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊໍານານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ໃສ່ຖົງມື | ☐ | ☐ |
| ເປີດບໍລິເວນອະວັຍຍະວະເພດອອກເທົ່ານັ້ນ | ☐ | ☐ |
| ລ້າງ ແລະ ເຊັດອະວັຍຍະວະເພດຊາຍໃຫ້ແຫ້ງຢ່າງລະມັດລະວັງ, ຕັດຂົນຍາວອອກ | ☐ | ☐ |
| ສັງເກດເບິ່ງຜິວຫນັງຂອງອະວັຍຍະວະເພດຊາຍເບິ່ງວ່າມີບ່ອນເປີດຫລືບໍ່ | ☐ | ☐ |
| ຖ້າຫາກວ່າມີບ່ອນເຈັບ ຫລື ແດງຢູ່, ຢ່າສູ່ເອົາປອກຄອນໂດມໃສ່ | ☐ | ☐ |
| ທາຢາງກາວສໍາລັບຜິວຫນັງໃສ່ອະວັຍຍະວະເພດຊາຍ | ☐ | ☐ |
| ກິ້ງທໍ່ຢາງປອກຄອນໂດມກວມເອົາອະວັຍຍະວະເພດຊາຍ | ☐ | ☐ |
| ຕິດປອກຄອນໂດມໃສ່ທໍ່ຢາງ. ກວດເບິ່ງວ່າປາຍຂອງປອກຄອນໂດມບໍ່ບິດກ້ຽວກັນ | ☐ | ☐ |
| ມັດທໍ່ຢາງໃສ່ຂາຂອງລູກຄ້າ. ໃຫ້ແນ່ໃຈວ່າຖົງຢູ່ຕໍ່າກວ່າລະດັບຂອງພົກຍ່ຽວ | ☐ | ☐ |
| ປົດຖົງມືອອກ ແລະ ຖິ້ມຖົງມືໄປ ແລະ ລ້າງມື | ☐ | ☐ |

**ການຊ່ວຍເຫລືອນຳຢາກິນ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ກວດເບິ່ງຕາຕະລາງເວລາກິນຢາຂອງລູກຄ້າ | ☐ | ☐ |
| ຕັກເຕືອນລູກຄ້າວ່າມັນເຖິງເວລາທີ່ຖືກນັດໄວ້ແລ້ວເພື່ອຈະກິນຢາສັ່ງຊື້ຈາກທ່ານໝໍ | ☐ | ☐ |
| **ເລືອກເອົາກ່ອງຢາທີ່ຖືກຕ້ອງ, ທີ່ມີຊື່ຂອງລູກຄ້າຕິດຢູ່** | ☐ | ☐ |
| ເອົາກ່ອງຢາຈາກບ່ອນທີ່ມັນຖືກເກັບໄວ້, ຫລຽວເບິ່ງປ້າຍຊື່ຕິດກ່ອງຢາ, ແລະ ກວດເບິ່ງສິ່ງທີ່ຖືກຕ້ອງ 5 ຢ່າງ -ຢາ, ລູກຄ້າ, ຈຳນວນ, ທາງໃຊ້ຢາ, ແລະ ເວລາ | ☐ | ☐ |
| ເປີດກ່ອງຢາ, ເບິ່ງປ້າຍຊື່ຕິດກ່ອງຢາ ແລະ ພິສູດສິ່ງທີ່ຖືກຕ້ອງ 5 ຢ່າງໃຫມ່ອີກ | ☐ | ☐ |
| ຖອກຢາອອກຈາກກ່ອງຢາໃສ່ຝາກ່ອງຢາໂດຍບໍ່ຕ້ອງບາຍຢາ | ☐ | ☐ |
| ພາລູກຄ້າກິນຢາ | ☐ | ☐ |
| ເອົາຢາໃຫ້ລູກຄ້າໃນຈຳນວນເມັດທີ່ຖືກຕ້ອງໂດຍການຖອກຢາອອກຈາກຝາກ່ອງຢາໄປໃສ່ມືຂອງເຂົາເຈົ້າໂດຍບໍ່ຕ້ອງບາຍຢາ | ☐ | ☐ |
| **ຊ່ວຍລູກຄ້າໃຫ້ກິນຢາໂດຍບໍ່ຕ້ອງເອົາມືຂອງທ່ານປິດປາກຂອງລູກຄ້າຫລືເອົາຢາໃສ່ມືຂອງລູກຄ້າເພື່ອຈະເອົາຢາເຂົ້າໃສ່ປາກຂອງລູກຄ້າ,ຫລື ວາງເມັດຢາໃສ່ປາກຂອງລູກຄ້າໂດຍກົງໂລດ** | ☐ | ☐ |
| ເອົານ້ຳຕົ້ມຈອກໃຫ້ລູກຄ້າ (ສຳລັບຢາກິນ) | ☐ | ☐ |
| ສັງເກດເບິ່ງແລະໃຫ້ແນ່ໃຈວ່າໄດ້ກິນຢາແລ້ວ.ຖາມລູກຄ້າຫລືກວດເບິ່ງວ່າຢາໄດ້ຖືກກືນລົງຄໍແລ້ວ | ☐ | ☐ |
| ປິດກ່ອງຢາໄວ້ແລະເອົາໄວ້ຄືນໃນບ່ອນທີ່ເຫມາະສົມ:ພິສູດສິດທິຫ້າ (5) ຢ່າງໃຫມ່ອີກ | ☐ | ☐ |
| ບັນທຶກວ່າລູກຄ້າໄດ້ກິນຢາແລ້ວ.ຖ້າຫາກວ່າເຂົາເຈົ້າຍັງບໍ່ທັນໄດ້ກິນເທື່ອ,ບັນທຶກໄວ້ອີກຄືກັນ | ☐ | ☐ |
| ລ້າງມື | ☐ | ☐ |

**ສຳລັບການສອບເສັງເບິ່ງຄວາມຊຳນານຂອງ HCA, ລູກຄ້າກຳລັງນັ່ງຢູ່ໂຕະໃນຂະນະທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.**

**ຊ່ວຍເຫລືອລູກຄ້ານຳການໃຊ້ວັງຽງຢູ່ຕຽງນອນ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ S.W.I.P.E.S. ການຕິດຕໍ່ສື່ສານ / ສິດທິຂອງລູກຄ້າ ແລະ ຄວາມຊຳນານໃນພາກປະຕິບັດຂອງການເບິ່ງແຍງດູແລທົ່ວໄປ | ☐ | ☐ |
| ກ່ອນຈະວາງວັງຽງຢູ່ຕຽງນອນໃສ່, ຍົກຫົວຕຽງໃຫ້ຕ່ຳລົງ | ☐ | ☐ |
| ໃສ່ຊົບມືເພື່ອຈະວາງວັງຽງຢູ່ຕຽງນອນໃສ່ໃຫ້ຖືກຕ້ອງຢູ່ກ້ອງກົ້ນຂອງລູກຄ້າ (ວັງຽງຢູ່ຕຽງນອນຕາມາດຕະຖານ: ວາງວັງຽງໃຫ້ສ່ວນກວ້າງຂອງວັງຽງຊີ້ກົງກັບກົ້ນຂອງລູກຄ້າ; ວັງຽງເປີດ: ວາງວັງຽງໂດຍມີງວງປີ້ນໄປຫາຕີນຂອງຕຽງ) . ໃຫ້ລູກຄ້າກົ່ງຫົວເຂົ່າ ແລະ ຍົກກົ້ນຂຶ້ນ (ຖ້າສາມາດເຮັດໄດ້) | ☐ | ☐ |
| ຍົກຫົວຕຽງຂຶ້ນຫລັງຈາກທີ່ວາງວັງຽງຢູ່ຕຽງນອນໃສ່ຢູ່ກ້ອງລູກຄ້າ | ☐ | ☐ |
| ເອາເຈັ້ຽຫ້ອງນ້ຳໃສ່ຢູ່ໃກ້ເອື້ອມມືຂອງລູກຄ້າ | ☐ | ☐ |
| ຖາມລູກຄ້າເພື່ອຈະບອກໃຫ້ທ່ານຮູ້ຈັກເວລາເຂົາເຈົ້າເຮັດແລ້ວ | ☐ | ☐ |
| ສະເນີໃຫ້ປົກລູກຄ້າດ້ວຍຜູ້ປູບ່ອນນອນຫລືຜ້າຫົ່ມ | ☐ | ☐ |
| ຍົກຫົວຕຽງລົງກ່ອນທີ່ຈະເອົາວັງຽງຢູ່ຕຽງນອນອອກ | ☐ | ☐ |
| ໃສ່ຊົບມືກ່ອນທີ່ຈະເອົາວັງຽງຢູ່ຕຽງນອນອອກ | ☐ | ☐ |
| ເອົາວັງຽງຢູ່ຕຽງນອນອອກແລະຖອກຖິ້ມໃສ່ຫົວສ້ວມ | ☐ | ☐ |
| ທຳການບົວຣະບັດກົ້ນ (ເຮັດຕາມວິທີການຂອງລາຍການກວດເບິ່ງ) ,ຖ້າຕ້ອງການ | ☐ | ☐ |
| ທຳຄວາມສະອາດ ແລະ ຂ້າເຊື້ອໂຣກອຸບປະກອນອີງຕາມມາດຕາການ. ເກັບມັຽນໄວ້ບ່ອນເກັບທີ່ເຫມາະສົມ | ☐ | ☐ |
| ຖອດຊົບມືອອກ ແລະ ຖິ້ມຊົບມືໄປ ແລະ ລ້າງມື | ☐ | ☐ |

**ແຖຫນວດດ້ວຍມີດແຖທີ່ປອດພັຍ - ເພື່ອວ່າທ່ານຈະສະແດງໃຫ້ເຫັນຄວາມຊຳນານອັນນີ້ຢ່າງເປັນຜົນສຳເຣັດ ທ່ານຈະຕ້ອງໄດ້:**

| | ແມ່ນ | ບໍ່ແມ່ນ |
|---|---|---|
| ໃຊ້ຄວາມຊຳນານ S.W.I.P.E.S. | ☐ | ☐ |
| ໃສ່ຊົບມື | ☐ | ☐ |
| ຖາມລູກຄ້າວ່າເຂົາເຈົ້າໃສ່ແຂ້ວປອມ ຫລື ບໍ່. ຖ້າໃສ່, ແນ່ໃຈວ່າແຂ້ວປອມຢູ່ໃນປາກຂອງເຂົາເຈົ້າ | ☐ | ☐ |
| ລ້າງຫນ້າດ້ວຍຜ້າເຊັດຫນ້າປຽກອຸ່ນ | ☐ | ☐ |
| ທານ້ຳຢາແຖຫນວດໃສ່ບ່ອນທີ່ຈະແຖ | ☐ | ☐ |
| ຖືມີດແຖຫນວດໃຫ້ແຫນ້ນ | ☐ | ☐ |
| ຈັບຫນັງໃຫ້ເຂັ່ງດ້ວຍມືທີ່ບໍ່ໄດ້ຈັບຫຍັງ ແລະ ແຖດ້ວຍການເຄື່ອນທີ່ຢ່າງແນບນຽນໃນແນວທາງຂອງຫນວດ | ☐ | ☐ |
| ລ້າງໃຫ້ກ້ຽງມີດແຖຫນວດໃສ່ໃນນ້ຳອຸ່ນຣະຫວ່າງມີດເພື່ອຈະເກັບຮັກສາມີດແຖໃຫ້ສະອາດ ແລະ ປຽກ | ☐ | ☐ |
| ແຖທາງຂ້າງກ່ອນ, ແລ້ວດັງ ແລະ ປາກ | ☐ | ☐ |
| ລ້າງ, ລ້າງໃຫ້ກ້ຽງ, ແລະ ເຊັດຫນ້າໃຫ້ແຫ້ງ | ☐ | ☐ |
| ທຳຄວາມສະອາດ ແລະ ເອົາອຸບປະກອນໄປມ້ຽນໄວ້ | ☐ | ☐ |
| ຖອດຊົບມືອອກ ແລະ ຖິ້ມໄປ ແລະ ລ້າງມື | ☐ | ☐ |

## ລາຍການກວດເບິ່ງວິທີການພາກປະຕິບັດຄວາມຊຳນານສຳລັບຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ ກົມ **DSHS** ໄດ້ອະນຸມັດ
## ຫລັກຖານພິສູດຂອງການສຳເຣັດພາກປະຕິບັດຄວາມຊຳນານໃນວຽກງານຂອງ **HCS**
## ຖືກເອົາໃຫ້ໂດຍອາຈານສອນຂອງສະຖາບັນຢູ່ໃນ **AFH, ALF, ຫລື ESF**

**Skills Practice Procedure Checklist for Home Care Aides DSHS Approved**
**Verification of HCS On The Job Skills Practice Training**
**Provided by Facility Instructor(s) in an AFH, ALF, or ESF**

ເຈັ້ຽຫນ້ານີ້ *ຕ້ອງ* ຖືກສົ່ງໄປຫາຫນ່ວຍ **DSHS Training Unit** ສຳລັບຜູ້ສະມັກສອບການເປັນຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ *ແຕ່ລະຄົນ* ຜູ້ທີ່ໄດ້ສຳເຣັດການຝຶກຝົນຄວາມຊຳນານຢູ່ໃນວຽກຕົວຈິງຢູ່ສະຖາບັນຂອງທ່ານ.

**ສົ່ງອີແມລ໌,ຫນ້ານີ້ເທົ່ານັ້ນໄປ**ຫາ TrainingApprovalITPA@dshs.wa.gov inbox. ຂຽນໃສ່ “Facility On-The-Job Training” ໃນແຖວຫົວເຣື່ອງ.

__________________________________ ໄດ້ສະແດງໃຫ້ເຫັນຢ່າງເປັນຜົນສຳເຣັດ, ໃນຂະນະທີ່ເຮັດວຽກນຳລູກຄ້າ, ຊ່ອງຫນ້າອາຈານ
ຊື່ຂອງນັກຮຽນ

ສອນຂອງສະຖາບັນທີ່ກົມ DSHS ອະນຸມັດໃຫ້, ຂັ້ນຕອນສຳຄັນທຸກໆຢ່າງທີ່ຕ້ອງມີສຳລັບພາລະກິດຂອງການເບິ່ງແຍງດູແລສ່ວນຕົວໄດ້ຖືກລວມຢູ່ໃນລາຍການກວດເບິ່ງວິທີການອັນນີ້.

| ຊື່ຂອງສະຖາບັນ | | ເລກການຝຶກຝົນຂອງສະຖາບັນ<br>**WA** |
|---|---|---|
| ລາຍເຊັນຂອງອາຈານສອນ | ຂຽນຊື່ຂອງອາຈານສອນເປັນຕົວພິມ | ເລກໂຄດການຝຶກຝົນຂອງອາຈານສອນ |
| ລາຍເຊັນຂອງນັກຮຽນ | ຂຽນຊື່ຂອງນັກຮຽນ | ວັນທີຂອງຄວາມສຳເຣັດ |

ກະຣຸນາສັງເກດ: ພາລະກິດຄວາມຊຳນານທຸກໆຢ່າງຕ້ອງໄດ້ຖືກສອນໂດຍອາຈານສອນຂອງສະຖາບັນທີ່ຖືກອະນຸມັດ ແລະ ຖືກສະແດງໃຫ້ເຫັນໂດຍຄົນງານຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນ/ພະນັກງານ. ເມື່ອເວລາຕ້ອງການ, ຖ້າຫາກວ່າບໍ່ມີລູກຄ້າຄົນໃດວ່າງ ຫລື ບໍ່ມີລູກຄ້າຄົນໃດຕົກລົງເຫັນພ້ອມທີ່ຈະເຂົ້າຮ່ວມນຳໃນວິທີການຝຶກຝົນຄວາມຊຳນານໂດຍສະເພາະ, ຄວາມສາມາດເຮັດຄວາມຊຳນານຂອງຜູ້ຊ່ວຍການເບິ່ງແຍງດູແລຢູ່ຕາມເຮືອນອາດຈະຖືກຕີຣາຄາເບິ່ງໂດຍການໃຊ້ຫຸ່ນຄົນ ຫລື ເພື່ອນຮ່ວມການຝຶກຝົນ.

**ຫນ້ານີ້ບໍ່ຕ້ອງການໃຫ້ຖືກຂຽນປະກອບແລະສົ່ງກັບຄືນມາຫາກົມຖ້າຫາກວ່າການຝຶກຝົນວິຊາສະເພາະຄວາມຊຳນານສຳລັບຜູ້ຊ່ວຍຢູ່ຕາມເຮືອນຖືກສອນໂດຍອາຈານສອນຢູ່ໃນຊຸມຊົນທີ່ມີສັນຍານຳກົມ DSHS ຢູ່ໃນຫ້ອງວິໄຈຄວາມຊຳນານ.**